ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສະພາແຫ່ງຊາດ ເລກທີ 57 /ສພຊ

# ມະຕິຕົກລົງ
## ຂອງ
## ສະພາແຫ່ງຊາດ ແຫ່ງ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ ວ່າດ້ວຍ ປ່າໄມ້ ສະບັບປັບປຸງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະໜ້າທີ່ຂອງສະພາແຫ່ງຊາດ.

ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ກ່ຽວກັບແຜນການສ້າງ ແລະປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດຊຸດທີ່ V ສະບັບເລກທີ 71/ສພຊ. ລົງວັນທີ່ 12 ຕຸລາ 2002;

ພາຍຫລັງທີ່ກອງປະຊຸມສະໄໝ ສາມັນເທື່ອທີ່ 8 ຂອງສະພາແຫ່ງຊາດຊຸດທີ່ V ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະເລິກເຊິ່ງກ່ຽວກັບເນື້ອໃນການປັບປຸງຂອງກົດໝາຍວ່າດ້ວຍ ປ່າໄມ້ ສະບັບປັບປຸງໃນວາລະປະຊຸມຕອນເຊົ້າຂອງວັນທີ 9 ພະຈິກ 2005.

## ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1:</u> ຮັບຮອງເອົາກົດໝາຍວ່າດ້ວຍ ປ່າໄມ້ ສະບັບປັບປຸງ ດ້ວຍຄະແນນສຽງ ເຫັນດີເປັນສ່ວນຫລາຍ.

<u>ມາດຕາ 2:</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ນະຄອນຫລວງວຽງຈັນ, ວັນທີ 9 ພະຈິກ 2005
ປະທານສະພາແຫ່ງຊາດ
ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 143 /ສປປ

ນະຄອນຫລວງວຽງຈັນ, ວັນທີ 9 /12/ 2005

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ປ່າໄມ້ ສະບັບປັບປຸງ

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໝວດທີ V ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 57/ສພຊ, ລົງວັນທີ 9 ພະຈິກ 2005 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ປ່າໄມ້ ສະບັບປັບປຸງ;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 20/ ຄປຈ, ລົງວັນທີ 18 ພະຈິກ 2005.

**ປະທານປະເທດ**

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວອອກລັດຖະດຳລັດ:**

<u>ມາດຕາ 1:</u> ປະກາດໃຊ້ກົດໝາຍວ່າດ້ວຍ ປ່າໄມ້ ສະບັບປັບປຸງ.

<u>ມາດຕາ 2:</u> ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດແຫ່ງ ສປປລາວ

ຄຳໄຕ ສີພັນດອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

ສະພາແຫ່ງຊາດ ເລກທີ 13 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 09 ພະຈິກ 2005

# ກົດໝາຍ
# ວ່າດ້ວຍປ່າໄມ້ ສະບັບປັບປຸງ

---

## ພາກທີ I
## ບົດບັນຍັດ ທົ່ວໄປ

### ມາດຕາ 1. ໜ້າທີ່ ຂອງກົດໝາຍປ່າໄມ້

ກົດໝາຍປ່າໄມ້ ສະບັບນີ້ ກໍານົດຫລັກການ, ລະບຽບການ ແລະມາດຕະການພື້ນຖານ ກ່ຽວກັບ ການຄຸ້ມຄອງ, ປົກປັກຮັກສາ, ນໍາໃຊ້ ຊັບພະຍາກອນປ່າໄມ້ ແລະທີ່ດິນປ່າໄມ້, ສົ່ງເສີມ ການຟື້ນຟູ, ປູກ ແລະຂະຫຍາຍ ຊັບພະຍາກອນປ່າໄມ້ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແນໃສ່ເຮັດໃຫ້ ທໍາມະຊາດ ມີຄວາມສົມດຸນ, ເຮັດໃຫ້ປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນແຫຼ່ງ ທໍາມາຫາກິນ ແລະ ນໍາໃຊ້ ຂອງ ປະຊາຊົນ ໂດຍບໍ່ບົກແຫ້ງຈັກເທື່ອ, ຮັບປະກັນການ ປົກປັກຮັກສາແຫຼ່ງນໍ້າ, ປ້ອງກັນການເຊາະເຈື່ອນຂອງ ດິນ, ປົກປັກຮັກສາແນວພືດພັນ, ຕົ້ນໄມ້, ສັດນໍ້າ ແລະ ສັດປ່າ ແລະສິ່ງແວດລ້ອມ ປະກອບສ່ວນເຂົ້າໃນ ການພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ອຸດົມຮັ່ງມີຂຶ້ນເລື້ອຍໆ.

**ມາດຕາ 2. ປ່າໄມ້**

ປ່າໄມ້ແມ່ນຊັບພະຍາກອນທຳມະຊາດ ອັນລ້ຳຄ່າຂອງຊາດ ຊຶ່ງປະກອບດ້ວຍ ພືດພັນ, ຕົ້ນໄມ້ນາໆຊະນິດ ທີ່ເກີດຂຶ້ນຕາມທຳມະຊາດ ຫລື ປູກຂຶ້ນ ແລະ ຊຶ່ງການຄົງຕົວຂອງມັນເປັນສິ່ງຈຳເປັນ ສຳລັບການປົກປັກຮັກສາ ສິ່ງແວດລ້ອມ ແລະການດຳລົງຊີວິດຂອງມະນຸດ.

**ມາດຕາ 3. ຊັບພະຍາກອນປ່າໄມ້**

ຊັບພະຍາກອນປ່າໄມ້ ແມ່ນຊັບພະຍາກອນຕ່າງໆ ທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງປະກອບມີ ດິນ, ພືດພັນ, ຕົ້ນໄມ້, ນ້ຳ, ສັດນ້ຳ, ສັດປ່າ ແລະ ອື່ນໆ ທີ່ມີທັງຫມົດຢູ່ໃນເຂດທີ່ດິນປ່າໄມ້.

**ມາດຕາ 4. ທີ່ດິນປ່າໄມ້**

ທີ່ດິນປ່າໄມ້ ແມ່ນເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ ຫລືບໍ່ມີປ່າໄມ້ປົກຄຸມຢູ່ ຊຶ່ງລັດໄດ້ກຳນົດໃຫ້ເປັນທີ່ດິນປ່າໄມ້.

**ມາດຕາ 5. ກຳມະສິດ ກ່ຽວກັບປ່າໄມ້ ແລະທີ່ດິນປ່າໄມ້**

ປ່າໄມ້ທຳມະຊາດ ແລະ ທີ່ດິນປ່າໄມ້ ເປັນກຳມະສິດ ຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຕົວແທນ ໃນການຄຸ້ມຄອງ ແລະແບ່ງປັນການຊົມໃຊ້ ໃຫ້ບຸກຄົນ ແລະການຈັດຕັ້ງ ຢ່າງສົມເຫດສົມຜົນ. ບຸກຄົນ ແລະ ການຈັດຕັ້ງ ຈະມີສິດ ຄອບຄອງ ນຳໃຊ້ຕົ້ນໄມ້, ປ່າໄມ້ທຳມະຊາດ ແລະ ທີ່ດິນປ່າໄມ້ໃດຫນຶ່ງໄດ້ ກໍຕໍ່ເມື່ອໄດ້ຮັບອະນຸຍາດຈາກອົງການ ທີ່ມີສິດຫນ້າທີ່ກ່ຽວຂ້ອງເທົ່ານັ້ນ.

ສຳລັບຕົ້ນໄມ້ ແລະ ປ່າໄມ້ ທີ່ບຸກຄົນ ຫຼື ການຈັດຕັ້ງໄດ້ປູກ ຫລືຟື້ນຟູດ້ວຍເຫື່ອແຮງ ຫລື ທຶນຮອນຂອງຕົນ ໂດຍການຮັບຮູ້ຈາກລັດນັ້ນ ແມ່ນກຳມະສິດ ຂອງຜູ້ປູກ ຫລືຜູ້ຟື້ນຟູ ຊຶ່ງມີສິດຄອບຄອງ, ນຳໃຊ້, ໄດ້ຮັບຫມາກຜົນ, ໂອນ ແລະ ສືບທອດ ຕາມລະບຽບກົດຫມາຍ.

**ມາດຕາ 6. ການສົ່ງເສີມ ການປົກປັກຮັກສາ ແລະຂະຫຍາຍປ່າໄມ້**

ລັດສົ່ງເສີມບຸກຄົນ ແລະການຈັດຕັ້ງເຂົ້າຮ່ວມໃນການປົກປັກຮັກສາ, ຟື້ນຟູ, ປູກໄມ້ ແລະ ຂະຫຍາຍ ຊັບພະຍາກອນປ່າໄມ້ ດ້ວຍການວາງນະໂຍບາຍ, ລະບຽບການ ແລະມາດຕະການຕ່າງໆ ແນໃສ່ເຮັດໃຫ້ປ່າໄມ້ ເປັນຊັບພະຍາກອນ ທີ່ອຸດົມສົມບູນ, ມີຄຸນຄ່າ, ແລະ ບໍ່ບົກແຫ້ງຈັກເທື່ອ.

**ມາດຕາ 7.ສິດ ຜົນປະໂຫຍດ ກ່ຽວກັບ ການປົກປັກຮັກສາ ແລະ ຄຸ້ມ**ຄອງປ່າໄມ້ ແລະ ທີ່ດິນປ່າໄມ້

ບຸກຄົນ ແລະການຈັດຕັ້ງ ຊຶ່ງລັດໄດ້ມອບປ່າໄມ້, ທີ່ດິນປ່າໄມ້ ໃຫ້ປົກປັກຮັກສາ ແລະ ຄຸ້ມຄອງມີ

ສິດ ໄດ້ຮັບການຕອບແທນ ທາງດ້ານຜົນປະໂຫຍດຕ່າງໆເຊັ່ນ: ຊົມໃຊ້ໄມ້, ເກັບກູ້ເຄື່ອງປ່າຂອງດົງ ແລະ ອື່ນໆ ຕາມລະບຽບການສະເພາະ ຊຶ່ງອົງການທີ່ກ່ຽວຂ້ອງເປັນຜູ້ວາງອອກ.

**ມາດຕາ 8. ພັນທະໃນການປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້**

ບຸກຄົນ ແລະການຈັດຕັ້ງ ລ້ວນແຕ່ ມີພັນທະໃນການປົກປັກຮັກສາປ່າໄມ້, ຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ, ສັດປ່າ ແລະສິ່ງແວດລ້ອມ, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຖືກຕ້ອງຕາມລະບຽບການ, ບໍ່ເຮັດໃຫ້ປ່າໄມ້ ເຊື່ອມໂຊມ, ບົກແຫ້ງ, ວາງມາດຕະການ ອັນຈຳເປັນເພື່ອ ປ້ອງກັນບໍ່ໃຫ້ໄຟໄຫມ້ປ່າ, ປະກອບສ່ວນສະກັດກັ້ນ ການທຳລາຍປ່າໄມ້ ບໍ່ວ່າດ້ວຍວິທີໃດກໍຕາມ.

## ພາກທີ II
## ການຄຸ້ມຄອງ ປ່າໄມ້ ແລະກິດຈະການປ່າໄມ້

### ໝວດທີ 1
### ການຄຸ້ມຄອງປ່າໄມ້

**ມາດຕາ 9. ການຄຸ້ມຄອງປ່າໄມ້**

ການຄຸ້ມຄອງປ່າໄມ້ ປະກອບດ້ວຍ ການສຳຫລວດ, ຈັດສັນປ່າ, ເກັບກຳຂໍ້ມູນສະຖິຕິປ່າໄມ້, ການຂຶ້ນບັນຊີ, ການຈັດແບ່ງປະເພດ, ການກຳນົດຂອບເຂດປ່າໄມ້ ແລະທີ່ດິນປ່າໄມ້, ການຂຶ້ນແຜນກຳນົດການນຳໃຊ້, ການວາງລະບຽບການ, ການແບ່ງປັນການນຳໃຊ້ປ່າໄມ້ ແລະທີ່ດິນປ່າໄມ້, ການຊີ້ນຳທາງດ້ານວິຊາການ.

**ມາດຕາ 10. ການສຳຫລວດ, ຈັດສັນ ແລະກຳນົດປະເພດ ແລະຂອບເຂດປ່າໄມ້**

ລັດຖະບານ ມອບໃຫ້ ກະຊວງກະສິກຳ-ປ່າໄມ້ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ອຳນາດການປົກຄອງທ້ອງຖິ່ນ ດຳເນີນການສຳຫລວດ ແລະ ຈັດສັນປ່າ, ເກັບກຳຂໍ້ມູນກ່ຽວກັບປ່າໄມ້ ໃນຂອບເຂດທົ່ວປະເທດ ເພື່ອຈັດແບ່ງປະເພດ, ກຳນົດຂອບເຂດ, ຕິດຕາມສະພາບການປ່ຽນແປງຂອງປ່າໄມ້, ເນື້ອທີ່ດິນປ່າໄມ້ ແລະສິ່ງແວດລ້ອມ.

ການກຳນົດປະເພດປ່າໄມ້, ຂອບເຂດ ແລະ ເນື້ອທີ່ດິນປ່າໄມ້ ແຕ່ລະປະເພດ ຕ້ອງອີງໃສ່ທີ່ຕັ້ງ, ສະພາບ, ຄວາມສຳຄັນ ແລະ ຄວາມເຫມາະສົມ ຂອງຊັບພະຍາກອນປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ມີຢູ່ໃນແຕ່ລະເຂດພູມສາດ ຂອງປະເທດເປັນຫຼັກ.

ນອກຈາກນີ້ ຈະຕ້ອງໄດ້ກຳນົດປະເພດປ່າໄມ້, ຂອບເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ຢູ່ໃນການຄຸ້ມຄອງ ຂອງສູນກາງ, ແຂວງ, ກຳແພງນະຄອນ, ເມືອງ, ບ້ານ, ການຈັດຕັ້ງ ແລະ ບຸກຄົນ.

**ມາດຕາ 11. ການຂຶ້ນແຜນຄຸ້ມຄອງ , ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

ລັດຖະບານເປັນຜູ້ກຳນົດ ແຜນລວມ ໃນການຄຸ້ມຄອງ ແລະນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃນຂອບເຂດທົ່ວປະເທດ ຊຶ່ງປະກອບມີແຜນໄລຍະຍາວ, ໄລຍະກາງ ແລະໄລຍະສັ້ນ ແລ້ວນຳສະເຫນີ ຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງເອົາ.

ອຳນາດການປົກຄອງທ້ອງຖິ່ນ ໂດຍອີງຕາມແຜນການລວມ ຂອງລັດຖະບານ ແລະ ສະພາບການຕົວຈິງຢູ່ທ້ອງຖິ່ນເປັນຜູ້ຂຶ້ນແຜນຄຸ້ມຄອງ ແລະນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃນທ້ອງຖິ່ນຂອງຕົນແລ້ວນຳສະເຫນີ ຕໍ່ຂັ້ນເທິງຮັບຮອງເອົາ.

**ມາດຕາ 12. ການມອບປ່າໄມ້ ແລະທີ່ດິນ ປ່າໄມ້ໃຫ້ອຳນາດການປົກຄອງ**
**ທ້ອງ**ຖິ່ນຄຸ້ມຄອງ ແລະນຳໃຊ້

ພາຍຫລັງທີ່ໄດ້ຈັດສັນ ແລະແບ່ງປະເພດປ່າ, ກຳນົດຂອບເຂດປ່າໄມ້ ແລະ ທີ່ດິນປ່າໄມ້ແລ້ວລັດຖະບານ ຈະມອບສິດ ໃຫ້ອຳນາດການປົກຄອງທ້ອງຖິ່ນ, ຈາກນັ້ນ ແຂວງ, ກຳແພງນະຄອນ ຈະມອບໃຫ້ເມືອງ ແລະ ເມືອງຈະມອບໃຫ້ບ້ານ ຮັບຜິດຊອບ.

ໃນການມອບປ່າໄມ້ ແລະ ທີ່ດິນປ່າໄມ້ນັ້ນ ໃຫ້ອຳນາດການປົກຄອງແຂວງ, ກຳແພງນະຄອນ, ເມືອງ ຫລື ບ້ານ ທີ່ມີເຂດແດນຕິດຈອດກັນ ເຂົ້າຮ່ວມ ແລະ ຮັບຮູ້ນຳ.

**ມາດຕາ 13. ການມອບປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ບຸກຄົນ ແລະການຈັດຕັ້ງຄອບຄອງນຳໃຊ້**

ລັດມອບສິດນຳໃຊ້ທີ່ດິນປ່າໄມ້ຊຸດໂຊມ ຫລື ທີ່ດິນປອກໂລ້ນ ໃຫ້ບຸກຄົນ ແລະ ການຈັດຕັ້ງ ຕາມຄວາມສາມາດ ທາງດ້ານແຮງງານ ແລະ ທຶນຮອນ ເພື່ອປູກ ຫລື ຟື້ນຟູປ່າ ສຳລັບບຸກຄົນໃນເນື້ອທີ່ບໍ່ເກີນສາມ ເຮັກຕາ ຕໍ່ຫນຶ່ງແຮງງານໃນຄອບຄົວ, ໃນກໍລະນີ ທີ່ຕ້ອງການຫຼາຍກ່ວານັ້ນ ກໍມີສິດ ຂໍເຊົ່າຈາກລັດ, ສຳລັບການຈັດຕັ້ງນັ້ນ ໃຫ້ອີງໃສ່ ຄວາມສາມາດຕົວຈິງ ໃນການຜະລິດ.

ສຳລັບ ວິສາຫະກິດ ທີ່ຕ້ອງການນຳໃຊ້ ປ່າໄມ້ຊຸດໂຊມ ຫລືທີ່ດິນປອກໂລ້ນ ເພື່ອປູກໄມ້ນັ້ນ ລັດຈະມີນະໂຍບາຍສະເພາະ ເປັນແຕ່ລະກໍລະນີ.

ຫ້າມບຸກຄົນ ແລະ ການຈັດຕັ້ງ ນຳໃຊ້ປ່າໄມ້ທຳມະຊາດ ທີ່ດົກຫນາ ຫລື ປ່າເຫລົ່າ ທີ່ສາມາດເຕີບໃຫຍ່ຂະຫຍາຍຕົວ ເປັນປ່າທຳມະຊາດດ້ວຍມັນເອງນັ້ນ ເພື່ອປູກໄມ້ເປັນຂອງຕົນຢ່າງເດັດຂາດ.

**ມາດຕາ 14. ການຫັນປ່ຽນປ່າໄມ້ ຫລື ທີ່ດິນປ່າໄມ້**

ຫ້າມຫັນປ່ຽນເນື້ອທີ່ປ່າໄມ້ ຫລື ທີ່ດິນປ່າໄມ້ ທີ່ລັດຄຸ້ມຄອງ ຫລື ທີ່ລັດໄດ້ມອບໃຫ້ບຸກຄົນ ຫລື ການຈັດຕັ້ງໃດຫນຶ່ງຄອບຄອງ ແລະ ນຳໃຊ້ຕາມເປົ້າຫມາຍທີ່ໄດ້ກຳນົດໃຫ້ນັ້ນ ໄປຮັບໃຊ້ເປົ້າຫມາຍອື່ນ. ໃນກໍລະນີທີ່ຈຳເປັນ ເພື່ອຜົນປະໂຫຍດສ່ວນລວມ ອາດຈະຫັນປ່ຽນປ່າໄມ້ ຫລື ທີ່ດິນປ່າໄມ້ ໄປຮັບໃຊ້ເປົ້າຫມາຍອື່ນ ແຕ່ຕ້ອງໄດ້ຮັບອະນຸຍາດຈາກອົງການທີ່ມີສິດຫນ້າທີ່ກ່ຽວຂ້ອງເສຍກ່ອນ.

ອົງການທີ່ມີສິດໜ້າທີ່ ໃນການຕົກລົງ ກ່ຽວກັບການຫັນປ່ຽນປ່າໄມ້ ຫລື ທີ່ດິນປ່າໄມ້ ປະກອບມີ:

- ອຳນາດການປົກຄອງເມືອງ ສຳລັບເນື້ອທີ່ປ່າໄມ້ ຫລື ທີ່ດິນປ່າໄມ້ ແຕ່ ສາມເຮັກຕາລົງລຸ່ມ ໂດຍຄວາມເຫັນດີ ຂອງພະແນກກະສິກຳ-ປ່າໄມ້ ແຂວງ, ກຳແພງນະຄອນ;

- ອຳນາດການປົກຄອງແຂວງ, ກຳແພງນະຄອນ ສຳລັບເນື້ອທີ່ປ່າໄມ້ ຫຼືທີ່ດິນປ່າໄມ້ ເກີນ ສາມເຮັກຕາ ຫາ ຮ້ອຍເຮັກຕາໂດຍຄວາມເຫັນດີ ຂອງກະຊວງກະສິກຳ-ປ່າໄມ້;

- ກະຊວງກະສິກຳ-ປ່າໄມ້ ສຳລັບເນື້ອທີ່ປ່າໄມ້ ຫລື ທີ່ດິນປ່າໄມ້ ເກີນ ຮ້ອຍ ເຮັກຕາ ຫາສິບພັນເຮັກຕາ ໂດຍ ຄວາມເຫັນດີຂອງລັດຖະບານ;

- ລັດຖະບານ ສຳລັບເນື້ອທີ່ປ່າໄມ້ ຫລືທີ່ດິນປ່າໄມ້ ເກີນ ສິບພັນ ເຮັກຕາ ຂຶ້ນໄປໂດຍການຮັບຮອງ ຂອງສະພາແຫ່ງຊາດ.

**ມາດຕາ 15. ຄ່າການຫັນປ່ຽນປ່າໄມ້ ທຳມະຊາດ ຫລື ທີ່ດິນປ່າໄມ້**

ເມື່ອມີການຫັນປ່ຽນປ່າໄມ້ທຳມະຊາດ ຫລື ທີ່ດິນປ່າໄມ້ໄປຮັບໃຊ້ເປົ້າໝາຍອື່ນ ບໍ່ວ່າຈະເປັນການຫັນປ່ຽນແບບຖາວອນ ຫລື ຊົ່ວຄາວກໍຕາມ ຜູ້ໄດ້ຮັບອະນຸຍາດໃຫ້ຫັນປ່ຽນ ຈະຕ້ອງໄດ້ຮັບຜິດຊອບໃນການເສຍຄ່າທຳນຽມການຫັນປ່ຽນ, ປັບແປງທີ່ດິນ ແລະ ປູກຕົ້ນໄມ້ແທນຄືນ; ສຳລັບໄມ້ ແລະຊັບພະຍາກອນປ່າໄມ້ນັ້ນ ແມ່ນເປັນກຳມະສິດຂອງລັດ.

## ໝວດທີ 2
## ການຈັດແບ່ງປະເພດປ່າໄມ້

**ມາດຕາ 16. ປະເພດປ່າໄມ້**

ປ່າໄມ້ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຖືກຈັດແບ່ງ ອອກເປັນ ຫ້າ ປະເພດດັ່ງນີ້:

1. ປ່າປ້ອງກັນ;
2. ປ່າສະຫງວນ;
3. ປ່າຜະລິດ;
4. ປ່າຟື້ນຟູ;
5. ປ່າຊຸດໂຊມ ຫລື ທີ່ດິນປອກໂລ້ນ.

**ມາດຕາ 17. ປ່າປ້ອງກັນ**

ປ່າປ້ອງກັນ ແມ່ນປ່າໄມ້ ແລະ ທີ່ດິນປ່າໄມ້ ຊຶ່ງຖືກຈັດແບ່ງ ເພື່ອຈຸດປະສົງປ້ອງກັນ ແຫຼ່ງນ້ຳ, ປ້ອງກັນການເຊາະເຈື່ອນຂອງດິນ, ເຂດຍຸດທະສາດ ເພື່ອການປ້ອງກັນຊາດ, ປ້ອງກັນໄພທຳມະຊາດ, ສະພາບແວດລ້ອມ ແລະ ອື່ນໆ.

**ມາດຕາ 18. ປ່າສະຫງວນ**

ປ່າສະຫງວນ ແມ່ນປ່າໄມ້ ແລະ ທີ່ດິນປ່າໄມ້ ຊຶ່ງຖືກຈັດແບ່ງ ເພື່ອຈຸດປະສົງ ໃນການ ປົກປັກຮັກສາພັນສັດ, ພັນພືດ, ທຳມະຊາດ ແລະ ສິ່ງຕ່າງໆ ທີ່ມີຄຸນຄ່າ ທາງດ້ານປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະການຄົ້ນຄວ້າທົດລອງວິທະຍາສາດ.

**ມາດຕາ 19. ປ່າຜະລິດ**

ປ່າຜະລິດ ແມ່ນປ່າໄມ້ ແລະທີ່ດິນປ່າໄມ້ ຊຶ່ງຖືກຈັດແບ່ງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າດ້ານໄມ້ ແລະຜະລິດຕະພົນປ່າໄມ້ ຢ່າງເປັນປົກກະຕິຕະຫຼອດໄປ ຊຶ່ງບໍ່ມີຜົນກະທົບຢ່າງຮ້າຍແຮງ ຕໍ່ສິ່ງແວດລ້ອມ.

**ມາດຕາ 20. ປ່າຟື້ນຟູ**

ປ່າຟື້ນຟູ ແມ່ນປ່າໄມ້ ທີ່ຢູ່ໃນສະພາບ ທີ່ເປັນປ່າເຫລົ່າອ່ອນ ທີ່ໄດ້ຈັດແບ່ງໄວ້ ເພື່ອຟື້ນຟູ, ບູລະນະໃຫ້ກາຍເປັນປ່າເຫລົ່າແກ່ ແລະກາຍເປັນປ່າທຳມະຊາດ ທີ່ສົມບູນຄືນໄດ້.

**ມາດຕາ 21. ປ່າຊຸດໂຊມ**

ປ່າຊຸດໂຊມ ແມ່ນປ່າໄມ້ ທີ່ຖືກທຳລາຍຢ່າງໜັກ ເຊັ່ນ: ເນື້ອທີ່ດິນບໍ່ມີປ່າ ຫລື ເນື້ອທີ່ດິນປອກໂລ້ນ ຊຶ່ງຖືກຈັດແບ່ງໄວ້ ເພື່ອປູກຕົ້ນໄມ້ຄືນໃໝ່ ຫລື ມອບໃຫ້ບຸກຄົນ ແລະການຈັດຕັ້ງນຳໃຊ້ ເຂົ້າໃນການປູກຕົ້ນໄມ້, ການຜະລິດ ກະສິກຳ-ປ່າໄມ້-ລ້ຽງສັດ ແບບຖາວອນ ຫລື ນຳໃຊ້ເຂົ້າໃນເປົ້າໝາຍອື່ນ ຕາມແຜນພັດທະນາເສດຖະກິດແຫ່ງຊາດ.

## ໝວດທີ 3
## ການຄຸ້ມຄອງ ກິດຈະການປ່າໄມ້

**ມາດຕາ 22. ກິດຈະການປ່າໄມ້**

ກິດຈະການປ່າໄມ້ ແມ່ນທຸກການເຄື່ອນໄຫວ ທີ່ກ່ຽວຂ້ອງກັບປ່າໄມ້ ແລະຊັບພະຍາກອນປ່າໄມ້ ຊຶ່ງປະຕິບັດຢູ່ໃນ ຫລື ນອກເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ເຊັ່ນ: ການສຳຫຼວດ, ອອກແບບ, ການປູກ, ການຟື້ນຟູ, ການບົວລະບັດຮັກສາ, ການພັດທະນາປ່າໄມ້, ການຂຸດຄົ້ນ, ການເຄື່ອນຍ້າຍໄມ້ ແລະ ຜະລິດຕະພົນປ່າໄມ້, ການປຸງແຕ່ງ, ການປົກປັກຮັກສາຊັບພະຍາກອນປ່າໄມ້, ການປົກປັກຮັກສາແຫຼ່ງນ້ຳ, ສິ່ງແວດລ້ອມທຳມະຊາດ ກ່ຽວກັບປ່າໄມ້, ການປົກປັກຮັກສາ ແລະ ຂະຫຍາຍພັນພືດ, ພັນໄມ້, ພັນສັດປ່າ ແລະ ສັດນ້ຳ ລວມທັງການຍຸດຕິການຖາງປ່າເຮັດໄຮ່ ໄປເຮັດອາຊີບຄົງທີ່ .

**ມາດຕາ 23. ການດຳເນີນ ກິດຈະການປ່າໄມ້**

ບຸກຄົນ ຫລື ການຈັດຕັ້ງ ຈະດຳເນີນກິດຈະການປ່າໄມ້ໃດໜຶ່ງໄດ້ ກໍຕໍ່ເມື່ອ ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງປ່າໄມ້ ທີ່ກ່ຽວຂ້ອງເທົ່ານັ້ນ.

**ມາດຕາ 24. ການຂຶ້ນທະບຽນ ທຸລະກິດປ່າໄມ້**

ການຂຶ້ນທະບຽນທຸລະກິດປ່າໄມ້ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍທຸລະກິດ ທີ່ລັດໄດ້ປະກາດໃຊ້.

## ພາກທີ III
## ລະບຽບການນຳໃຊ້ປ່າໄມ້ ແລະທີ່ດິນປ່າໄມ້

### ໝວດທີ 1
### ການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້

**ມາດຕາ 25. ການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້**

ການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ດຳເນີນໄດ້ສະເພາະແຕ່ໃນເຂດປ່າຜະລິດ ທີ່ໄດ້ຜ່ານການສຳຫຼວດຈັດສັນ ແລະ ສຳຫຼວດເພື່ອຂຸດຄົ້ນ, ໃນເຂດທີ່ໄດ້ວາງແຜນ ຄຸ້ມຄອງປ່າໄມ້ເທົ່ານັ້ນ ແນໃສ່ຮັບປະກັນການຂຸດຄົ້ນໄມ້ ຢ່າງຕໍ່ເນື່ອງ ແລະໃຫ້ສາມາດກັບຄືນມາຂຸດຄົ້ນໄດ້ອີກ ໃນຕອນທີ່ໄດ້ຂຸດຄົ້ນແລ້ວ.

ການຂຸດຄົ້ນໄມ້ ຕ້ອງປະຕິບັດ ຕາມລະບຽບການຕົ້ນຕໍ ດັ່ງນີ້ :

- ນຳໃຊ້ລະບົບຕັດຍອນ, ຫ້າມການຕັດກ້ຽງ ເວັ້ນເສຍແຕ່ກໍລະນີຈຳເປັນ;
- ຕັດໄມ້ທີ່ກຳນົດໃຫ້ຕັດ ໂດຍຮັບປະກັນ ການສືບພັນ;
- ຕັດໄມ້ ຕ້ອງເກັບກູ້ເອົາ ເພື່ອນຳໃຊ້ ໃຫ້ໝົດຄຸນຄ່າ;
- ຕັດໄມ້ ຖືກຕາມ ເຕັກນິກ-ວິຊາການ;
- ຕັດໄມ້ ໂດຍຈຳກັດ ການທຳລາຍຕົ້ນໄມ້ທີ່ຢູ່ອ້ອມແອ້ມ, ຮັບປະກັນ ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ, ເກີດດິນເຊາະເຈື່ອນ ຫລື ນ້ຳ ບົກແຫ້ງ;
- ຕັດໄມ້ແລ້ວ ຕ້ອງບົວລະບັດຮັກສາປ່ານັ້ນ ຫຼື ປູກຄືນ;

ສຳລັບການຂຸດຄົ້ນ ຜະລິດຕະພົນປ່າໄມ້ເຊັ່ນ: ເຫັດ, ຮາກ, ຫົວ, ເຄືອ, ຍອດ, ໜໍ່, ໃບ, ດອກ, ໝາກ, ເປືອກ, ນ້ຳມັນ, ຢາງໄມ້ ແລະອື່ນໆ ນັ້ນໃຫ້ປະຕິບັດຕາມ ລະບຽບການສະເພາະ ຊຶ່ງອົງການທີ່ກ່ຽວຂ້ອງເປັນ ຜູ້ວາງອອກ .

**ມາດຕາ 26. ການເຄື່ອນຍ້າຍໄມ້ ແລະ ຜະລິດຕະພົນປ່າໄມ້**

ການເຄື່ອນຍ້າຍໄມ້ ແລະ ຜະລິດຕະພົນປ່າໄມ້ ຕ້ອງປະຕິບັດຕາມລະບຽບການ ເຊັ່ນ: ຈ່າຍຄ່າຊັບພະຍາກອນ, ໄມ້ແຕ່ລະທ່ອນ ຕ້ອງມີເຄື່ອງໝາຍ ແລະປະທັບຕາ, ມີເອກະສານເຄື່ອນຍ້າຍ, ເຄື່ອນຍ້າຍ

ຕາມເສັ້ນທາງທີ່ໄດ້ກໍານົດໃຫ້ ແລະ ຕ້ອງແຈ້ງຕໍ່ດ່ານກວດກາ.

**ມາດຕາ 27. ການຕັດໄມ້ ທີ່ຕົນໄດ້ປູກ**

ການຕັດໄມ້ ທີ່ຕົນໄດ້ປູກ ເພື່ອໃຊ້ໃນຄອບຄົວນັ້ນ ໃຫ້ລາຍງານ ຕໍ່ອໍານາດການປົກຄອງບ້ານ ເພື່ອຊາບ ແລະ ກວດກາ.

ຖ້າຈະເຄື່ອນຍ້າຍໄປເມືອງອື່ນ ຕ້ອງໄດ້ລາຍງານ ໃຫ້ເຈົ້າໜ້າທີ່ປ່າໄມ້ເມືອງຊາບ ເພື່ອກວດກາ.

ສໍາລັບການຕັດໄມ້ ເພື່ອເປັນສິນຄ້າ ຕ້ອງໄດ້ຮັບ ອະນຸຍາດ ຈາກພະແນກກະສິກໍາປ່າໄມ້ ແຂວງ, ກໍາແພງນະຄອນ ໂດຍສະເໜີຜ່ານ ຫ້ອງການກະສິກໍາປ່າໄມ້ ເມືອງ.

**ມາດຕາ 28. ການຂຸດຄົ້ນໄມ້ ແລະ ເກັບກູ້ຜະລິດຕະພັນປ່າໄມ້ ຈາກປ່າ**
**ຄຸ້ມຄອງ ແລະ ນໍາໃຊ້ຂອງບ້ານເພື່ອໃຊ້ສອຍໃນຄອບຄົວ**

ການຕັດໄມ້ ຢູ່ໃນປ່າຜະລິດຂອງບ້ານ ເພື່ອປຸກສ້າງ, ສ້ອມແປງ ແລະໃຊ້ສອຍໃນຄອບຄົວ ອະນຸຍາດໃຫ້ຕັດແຕ່ ໃນເຂດປ່າຜະລິດຂອງບ້ານ ແລະໄມ້ປະເພດບໍ່ຫວງຫ້າມ ຊຶ່ງບໍລິມາດ ບໍ່ເກີນ ຫ້າແມັດກ້ອນໄມ້ທ່ອນ ຕໍ່ ໜຶ່ງຄອບຄົວ ທີ່ມີຄວາມຈໍາເປັນ ຊຶ່ງຕ້ອງຕັດໃນເຂດທີ່ກໍານົດໃຫ້ ແລະ ປະຕິບັດຕາມ ລະບຽບການ ທີ່ອໍານາດການປົກຄອງບ້ານ ກໍານົດອອກ. ສ່ວນການເກັບກູ້ ຜະລິດຕະພັນປ່າໄມ້ ເພື່ອໃຊ້ສອຍໃນຄອບຄົວນັ້ນ ກໍໃຫ້ປະຕິບັດຕາມ ກົດລະບຽບຂອງບ້ານ ຊຶ່ງຮັບຮອງເອົາ ໂດຍຫ້ອງການກະສິກໍາປ່າໄມ້ເມືອງ.

**ມາດຕາ 29. ການສົ່ງໄມ້ ແລະ ຜະລິດຕະພັນປ່າໄມ້ອອກຕ່າງປະເທດ**

ການສົ່ງໄມ້ ຫລືຜະລິດຕະພັນປ່າໄມ້ ອອກຕ່າງປະເທດ ຕ້ອງປະຕິບັດຕາມລະບຽບການ ເຊັ່ນ: ໄດ້ຮັບອະນຸຍາດ ຈາກລັດຖະບານ, ສົ່ງອອກຕາມຈໍານວນທີ່ອະນຸຍາດໃຫ້ ແລະ ຜ່ານດ່ານທີ່ອະນຸຍາດ.

**ມາດຕາ 30. ການຊົມໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຕາມປະເພນີ**

ການຊົມໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມປະເພນີ ແມ່ນການຊົມໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະຜະລິດຕະພັນປ່າໄມ້ ທີ່ເຄີຍປະຕິບັດກັນມາເປັນເວລາດົນນານ ແລະຖືກຮັບຮູ້ໂດຍສັງຄົມ ຫລືກົດໝາຍຊຶ່ງມີການເກັບກູ້ໄມ້ ປະເພດບໍ່ຫວງຫ້າມ ມາເຮັດຮົ້ວ, ເຮັດຟືນ, ເກັບກູ້ຜະລິດຕະພັນປ່າໄມ້, ລ່າສັດ ແລະຫາສັດນໍ້າ ປະເພດທີ່ບໍ່ຫວງຫ້າມ ເພື່ອຊົມໃຊ້ ໃນຄອບຄົວ ແລະ ການຊົມໃຊ້ອື່ນໆຕາມປະເພນີ. ການຊົມໃຊ້ຕາມປະເພນີດັ່ງກ່າວ ບໍ່ໃຫ້ກໍ່ຄວາມເສຍຫາຍແກ່ປ່າໄມ້ ຫລື ຊັບພະຍາກອນປ່າໄມ້ ແລະບໍ່ໃຫ້ແຕະຕ້ອງເຖິງສິດຜົນປະໂຫຍດ ຂອງບຸກຄົນ ຫລື ການຈັດຕັ້ງ.

ການຊົມໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະ ຜະລິດຕະພັນປ່າໄມ້ ຕາມປະເພນີ ແມ່ນຕ້ອງປະຕິບັດຕາມກົດລະບຽບຂອງບ້ານກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້ ຊຶ່ງອໍານາດການປົກຄອງບ້ານ ເປັນຜູ້ກໍານົດອອກ

ໂດຍສອດຄ່ອງກັບຈຸດພິເສດຂອງບ້ານ ໃນແຕ່ລະໄລຍະ ແລະ ຖືກຕ້ອງ ຕາມມາດຕາ 63 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ອຸດສາຫະກຳປ່າໄມ້ ແລະຜະລິດຕະພັນປ່າໄມ້

### ມາດຕາ 31. ການສ້າງຕັ້ງ ແລະ ການເຄື່ອນໄຫວ ໂຮງງານປຸງແຕ່ງໄມ້ ຫລື ຜະລິດຕະພັນປ່າໄມ້

ການສ້າງຕັ້ງ ໂຮງງານປຸງແຕ່ງໄມ້ ຫລື ໂຮງງານປຸງແຕ່ງ ຜະລິດຕະພັນປ່າໄມ້ ຕ້ອງປະຕິບັດຕາມລະບຽບການວ່າດ້ວຍ ການສ້າງຕັ້ງໂຮງງານປຸງແຕ່ງໄມ້ ຫລືໂຮງງານປຸງແຕ່ງຜະລິດຕະພັນປ່າໄມ້ຢ່າງເຂັ້ມງວດ ແລະຕ້ອງໄດ້ຮັບອະນຸຍາດຈາກ ກະຊວງກະສິກຳ-ປ່າໄມ້ ແລະ ອົງການອື່ນທີ່ກ່ຽວຂ້ອງ. ການເຄື່ອນໄຫວໂຮງງານດັ່ງກ່າວ ຕ້ອງປະຕິບັດຕາມລະບຽບການ ເຊັ່ນ: ການນຳໃຊ້ວັດຖຸດິບທີ່ຖືກຕ້ອງ ແລະໃຊ້ໃຫ້ໝົດຄຸນຄ່າ, ການຈຳໜ່າຍຜະລິດຕະພັນປຸງແຕ່ງ ໃຫ້ຖືກຕ້ອງຕາມລະບຽບການ.

### ມາດຕາ 32. ການຄຸ້ມຄອງເຄື່ອງຈັກຊຸດຄົ້ນໄມ້ ແລະເຄື່ອງຈັກປຸງແຕ່ງໄມ້

ການນຳເຂົ້າ ແລະການຈຳໜ່າຍເຄື່ອງຈັກຊຸດຄົ້ນໄມ້ ແລະເຄື່ອງຈັກປຸງແຕ່ງໄມ້ທຸກຊະນິດ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງກະສິກຳ-ປ່າໄມ້ ແລະ ຕ້ອງປະຕິບັດຕາມລະບຽບການທີ່ກ່ຽວຂ້ອງອື່ນໆ.

ການຄອບຄອງແລະນຳໃຊ້ເຄື່ອງຈັກຕັດໄມ້ ແລະ ເຄື່ອງຈັກຊອຍໄມ້ນັ້ນ ຕ້ອງຂຶ້ນທະບຽນນຳ ພະແນກກະສິກຳ-ປ່າໄມ້ ແຂວງ, ກຳແພງນະຄອນ.

## ໝວດທີ 3
## ການປູກ ແລະຟື້ນຟູປ່າໄມ້

### ມາດຕາ 33. ຈຸດປະສົງ ການປູກ ແລະ ຟື້ນຟູປ່າໄມ້

ການປູກ ແລະ ການຟື້ນຟູປ່າໄມ້ ແມ່ນເພື່ອປົກປັກຮັກສາ ແລະ ເສີມຂະຫຍາຍຊັບພະຍາກອນປ່າໄມ້ຂອງຊາດ ແນໃສ່ຕອບສະໜອງການນຳໃຊ້ໄມ້ ແລະ ຜະລິດຕະພັນປ່າໄມ້ ຢ່າງບໍ່ບົກແຫ້ງ, ປົກປັກຮັກສາແຫຼ່ງນ້ຳ, ດິນ,ສັດນ້ຳ, ສັດປ່າ ແລະ ສິ່ງແວດລ້ອມ ໃຫ້ມີຄວາມສົມດຸນ ທັງເປັນແຫຼ່ງລາຍຮັບ ອັນສຳຄັນຂອງລັດ, ຂອງການຈັດຕັ້ງ ແລະ ຂອງບຸກຄົນ.

### ມາດຕາ 34. ການສົ່ງເສີມ ການປູກໄມ້

ລັດສົ່ງເສີມ ບຸກຄົນ ແລະ ການຈັດຕັ້ງປູກ ໄມ້ຢ່າງກ້ວາງຂວາງ ແລະ ເປັນຂະບວນ ບໍ່ວ່າຈະເປັນພັນພືດ, ພັນໄມ້ໄລຍະສັ້ນ,ໄລຍະກາງ ຫລື ໄລຍະຍາວ ດ້ວຍການວາງນະໂຍບາຍຕ່າງໆ ທີ່ເຫມາະສົມຕໍ່ການລົງທຶນພາຍໃນ ແລະ ຕ່າງປະເທດເຊັ່ນ: ນະໂຍບາຍສິນເຊື່ອ, ພາສີອາກອນ, ພັນພືດ, ພັນໄມ້, ຕໍ່ອາຍຸການໃຫ້ເຊົ່າ ພ້ອມທັງເພີ່ມເນື້ອທີ່ໃຫ້ເຊົ່າ ແລະ ອື່ນໆ ຕາມລະບຽບການ.

**ມາດຕາ 35. ການສົ່ງເສີມການຟື້ນຟູປ່າເຫຼົ່າ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ປົກປັກຮັກສາ, ຟື້ນຟູປ່າເຫລົ່າ ໃຫ້ກາຍເປັນປ່າດົບຫນາຄືນໃຫມ່ດ້ວຍການບູລະນະປ່າ, ບໍ່ຖາງປ່າເຮັດໄຮ່, ບໍ່ຕັດໄມ້ ຫລືບໍ່ຈູດປ່າດັ່ງກ່າວ ຈະໄດ້ຮັບການຍ້ອງຍໍເປັນພິເສດ ແລະນະໂຍບາຍຈາກລັດຖະບານ ເຊັ່ນ: ນະໂຍບາຍສິນເຊື່ອ, ພາສີອາກອນ.

**ມາດຕາ 36. ສະຖານທີ່ ແລະພັນໄມ້ ທີ່ຈະປູກ**

ການປູກໄມ້ ຕົ້ນຕໍ ແມ່ນໃຫ້ດຳເນີນ ໃນທີ່ດິນປ່າຊຸດໂຊມ, ທີ່ດິນເປົ່າຫວ່າງ, ທີ່ດິນປອກໂລ້ນທີ່ໄດ້ຈັດສັນແລ້ວ ແລະທີ່ດິນບ່ອນທີ່ໄດ້ຮັບອະນຸຍາດ ໃຫ້ຕັດໄມ້ອອກ ຊຶ່ງບໍ່ໄດ້ມີແຜນການນຳໃຊ້ ເຂົ້າໃນເປົ້າຫມາຍອື່ນ.

ການເລືອກພັນໄມ້ທີ່ຈະປູກ ແມ່ນອີງໃສ່ ເງື່ອນໄຂຂອງດິນຟ້າອາກາດ ຢູ່ໃນທ້ອງຖິ່ນນັ້ນ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງ.

**ມາດຕາ 37. ແຜນການປູກ ແລະຟື້ນຟູປ່າໄມ້**

ອີງຕາມ ແຜນພັດທະນາປ່າໄມ້ ຂອງລັດຖະບານ ອົງການປ່າໄມ້ທ້ອງຖິ່ນ ໃຕ້ການຊີ້ນຳຂອງອຳນາດການປົກຄອງທ້ອງຖິ່ນ ເປັນຜູ້ຮັບຜິດຊອບຂຶ້ນແຜນປູກ ແລະ ຟື້ນຟູປ່າໄມ້ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ໃນຂອບເຂດທ້ອງຖິ່ນຂອງຕົນ ໃນນັ້ນໃຫ້ບົ່ງແຈ້ງ ພັນໄມ້ ທີ່ຈະນຳມາປູກ, ສະຖານທີ່ ແລະ ເນື້ອທີ່ ທີ່ຈະປູກ ຫລື ຟື້ນຟູ ຊຶ່ງມີທັງຊື່ນະບົດ ແລະ ຕົວເມືອງ ຕະຫຼອດຮອດຜູ້ທີ່ຈະທຳການປູກ ຫລື ຟື້ນຟູ ແລະ ງົບປະມານໃນການປູກ, ການຟື້ນຟູ ແລະ ບົວລະບັດຮັກສາ.

**ມາດຕາ 38. ລະບຽບການປູກ ແລະຟື້ນຟູປ່າໄມ້**

ເພື່ອເຮັດໃຫ້ຄຸນນະພາບຂອງປ່າທີ່ປູກ ແລະ ຟື້ນຟູຄືນໃໝ່ ຖືກຕ້ອງຕາມມາດຕະຖານ ຂອງອົງການປ່າໄມ້ທີ່ວາງໄວ້ ມີຄວາມຈຳເປັນທີ່ຕ້ອງຮັບປະກັນ ເຕັກນິກ ໃນການປູກ ແລະ ຟື້ນຟູປ່າຄືນໃໝ່ ໃຫ້ຖືກຕ້ອງ ແລະ ເຫມາະສົມ.

ກະຊວງກະສິກຳ-ປ່າໄມ້ ມີຫນ້າທີ່ອອກລະບຽບການຕ່າງໆ ເພື່ອສົ່ງເສີມ ແລະ ຄຸ້ມຄອງເຕັກນິກ ວິທະຍາການ ກ່ຽວກັບການສືບພັນ ຕາມທຳມະຊາດ, ການຜະລິດແນວພັນ, ການປູກ, ການຕັດສາງ, ອະນາ

ໄມ້ປ່າໄມ້ ແລະ ບັນດາມາດຕະການ ທາງດ້ານເຕັກນິກອື່ນໆ ທີ່ກ່ຽວຂ້ອງກັບວຽກງານປູກ ແລະ ຟື້ນຟູປ່າຄືນໃໝ່.

## ໝວດທີ 4
## ສັດນ້ຳ ແລະ ສັດປ່າ

### ມາດຕາ 39. ສັດນ້ຳ ແລະສັດປ່າ

ສັດນ້ຳ ແລະສັດປ່າ ທີ່ອາໄສຢູ່ຕາມທຳມະຊາດ ໃນດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງແມ່ນລັດເປັນຕົວແທນ ໃນການຄຸ້ມຄອງຢ່າງລວມສູນ ແລະເປັນເອກະພາບໃນຂອບເຂດທົ່ວປະເທດ. ລັດມອບສິດ ແລະຄວາມຮັບຜິດຊອບໃຫ້ ພົນລະເມືອງລາວ ປົກປັກຮັກສາ, ຂະຫຍາຍພັນ ແລະ ນຳໃຊ້ ສັດດັ່ງກ່າວ ຕາມລະບຽບກົດໝາຍຂອງລັດ ແລະ ຮັບປະກັນໃຫ້ຈຳນວນ ສັດນ້ຳ, ສັດປ່າ ນັບມື້ນັບເພີ່ມທະວີຂຶ້ນ.

ລັດເປັນຜູ້ຈັດ ສັດນ້ຳ ແລະສັດປ່າ ອອກເປັນປະເພດ ຫວງຫ້າມ ແລະ ບໍ່ຫວງຫ້າມ ຕາມຂໍ້ກຳນົດສະເພາະ ຊຶ່ງອົງການທີ່ກ່ຽວຂ້ອງເປັນຜູ້ວາງອອກ .

### ມາດຕາ 40. ການມີໄວ້ໃນຄອບຄອງ, ການລ່າ ແລະການເຄື່ອນຍ້າຍ ສັດນ້ຳ ແລະສັດປ່າ

ການຄອບຄອງສັດນ້ຳ ແລະສັດປ່າ ບາງຊະນິດ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ກ່ຽວຂ້ອງເສຍກ່ອນ.

ສັດບາງປະເພດສາມາດຈັບ ຫລື ລ່າໄດ້ ແຕ່ຫ້າມລ່າໃນລະດູທີ່ຫວງຫ້າມ ຫລື ໃນເຂດຫວງຫ້າມ, ຫ້າມນຳໃຊ້ ອຸປະກອນ ທີ່ມີລັກສະນະດັບສູນ ເຊັ່ນ: ລະເບີດ, ຢາເບື່ອ, ໄຟຟ້າ ແລະອື່ນໆ.

ສຳລັບສັດປະເພດຫວງຫ້າມໃກ້ຈະສູນພັນ ແມ່ນຫ້າມຈັບ ຫລື ລ່າເດັດຂາດ ເວັ້ນເສຍແຕ່ໃນກໍລະນີເພື່ອສຶກສາຄົ້ນຄ້ວາ ແລະ ທີ່ຈຳເປັນ ຊຶ່ງສັດດັ່ງກ່າວ ຈະທຳຮ້າຍຄົນ. ກ່ອນຈະຂ້າ ຫລື ພາຍຫລັງທີ່ຂ້າແລ້ວ ຕ້ອງຂໍອະນຸຍາດ ຫລືລາຍງານຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ. ສ່ວນສັດ ທີ່ຖືກຂ້ານັ້ນ ຕົກເປັນກຳມະສິດຂອງລັດ.

ຫ້າມການເຄື່ອນຍ້າຍ, ສົ່ງອອກ, ນຳເຂົ້າ ຫລືຊື້ຂາຍ ສັດນ້ຳ ແລະ ສັດປ່າທີ່ຫວງຫ້າມ ບໍ່ວ່າຍັງມີຊີວິດ ຫລື ບໍ່ມີຊີວິດລວມທັງຊາກສັດ ຫລືສິ້ນສ່ວນຂອງສັດເຫລົ່ານັ້ນ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ ແຕ່ຕ້ອງປະຕິບັດຕາມລະບຽບການ. ເຄື່ອງມືລ່າເນື້ອທີ່ສຳຄັນ ເຊັ່ນ ປືນລ່າເນື້ອທຸກຊະນິດ ຕ້ອງມີໃບອະນຸຍາດ ແລະ ຂຶ້ນທະບຽນ.

## ໝວດທີ 5
## ການປົກປັກຮັກສາປ່າໄມ້

ມາດຕາ 41. ການປົກປັກຮັກສາປ່າປ້ອງກັນ

ເພື່ອປ້ອງກັນແຫຼ່ງນ້ຳ, ປ້ອງກັນການເຊາະເຈື່ອນຂອງດິນ, ເຂດຍຸດທະສາດປ້ອງກັນຊາດ, ປ້ອງກັນໄພທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ ມີຄວາມຈຳເປັນ ຕ້ອງໄດ້ປົກປັກຮັກສາປ່າປ້ອງກັນ ຢ່າງເຂັ້ມງວດ ເຊັ່ນ: ຫ້າມເຮັດໄຮ່, ຕັດ, ທຳລາຍ, ຈູດເຜົາ, ເຄື່ອນຍ້າຍຕົ້ນໄມ້, ຕັດໄມ້ຟືນ, ເອົາສັດເຂົ້າໄປລ້ຽງ, ຕັ້ງບ້ານເຮືອນ, ກໍ່ສ້າງກິດຈະການອື່ນໆ ນັບທັງການຂຸດຄົ້ນດິນ, ຫີນ ຫຼືບໍ່ແຮ່, ລ່າສັດ ຫຼື ເກັບກູ້ເຄື່ອງປ່າຂອງດົງປະເພດທີ່ຫວງຫ້າມ.

**ມາດຕາ 42. ການປົກປັກຮັກສາປ່າສະຫງວນ**

ເພື່ອປົກປັກຮັກສາປ່າໄມ້ ໃຫ້ອຸດົມສົມບູນ ກໍຄືປົກປັກຮັກສາພັນພືດ, ພັນສັດ ແລະ ຄວາມຫຼາກຫຼາຍທາງ ດ້ານຊີວະສາດ ໃຫ້ດຳລົງຄົງຕົວ ແລະ ຂະຫຍາຍຕົວ ພ້ອມກັນນັ້ນກໍໃຫ້ມີປ່າໄມ້, ທິວທັດທຳມະຊາດ ທີ່ສວຍສົດງົດງາມ ເພື່ອການພັດທະນາ ສວນອຸດທິຍານແຫ່ງຊາດ ເໝາະສົມແກ່ການທ່ອງທ່ຽວ ແລະ ການຄົ້ນຄ້ວາທົດລອງທາງດ້ານວິທະຍາສາດນັ້ນ ມີຄວາມຈຳເປັນ ຕ້ອງໄດ້ປົກປັກຮັກສາ ປ່າສະຫງວນ ແລະ ຕ້ອງແບ່ງປ່າສະຫງວນອອກເປັນ ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນຳໃຊ້ ແລະ ເຂດເຊື່ອມຕໍ່.

ເຂດຫວງຫ້າມເດັດຂາດ ແມ່ນເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ຊຶ່ງເປັນບ່ອນອາໄສ, ຫາກິນ ແລະ ຂະຫຍາຍພັນຕົ້ນຕ ຂອງສັດຕ່າງໆ ແລະ ເປັນບ່ອນທີ່ມີພັນພືດທີ່ຫຼາກຫຼາຍ ແລະ ດົກໜາ. ໃນເຂດນີ້ ຫ້າມເດັດຂາດການດຳເນີນກິດຈະການປ່າໄມ້, ເກັບກູ້ຜະລິດຕະພັນປ່າໄມ້ ລວມທັງການເຂົ້າໄປໃນເຂດດັ່ງກ່າວ ຢ່າງເດັດຂາດ ຖ້າບໍ່ໄດ້ຮັບອະນຸຍາດ. ການເຄື່ອນຍ້າຍພັນພືດ, ພັນສັດ ກໍຫ້າມເຊັ່ນດຽວກັນ ເວັ້ນເສຍແຕ່ໄດ້ຮັບອະນຸຍາດພິເສດ ຈາກອຳນາດການປົກຄອງທ້ອງຖິ່ນ ແລະ ກະຊວງກະສິກຳ-ປ່າໄມ້ ເທົ່ານັ້ນ.

ເຂດຄຸ້ມຄອງການນຳໃຊ້ ແມ່ນເຂດປ່າໄມ້ ຫລື ທີ່ດິນປ່າໄມ້ ທີ່ຢູ່ຕິດຈອດ ຫລື ໃກ້ຄຽງກັບເຂດຫວງຫ້າມເດັດຂາດ ຊຶ່ງອະນຸຍາດໃຫ້ປະຊາຊົນນຳໃຊ້ໂດຍມີການຈຳກັດ ກ່ຽວກັບການຂຸດຄົ້ນໄມ້, ຜະລິດຕະພັນປ່າໄມ້ ແລະ ການລ່າເນື້ອ ຊຶ່ງຈະໄດ້ກຳນົດລະອຽດໃນລະບຽບການສະເພາະ ແນໃສ່ເຮັດໃຫ້ການປົກປັກຮັກສາເຂດຫວງຫ້າມ ເດັດຂາດດັ່ງກ່າວມີປະສິດທິຜົນ.

ເຂດເຊື່ອມຕໍ່ ແມ່ນແລວປ່າ ຫລື ທີ່ດິນປ່າໄມ້ ຊຶ່ງເປັນທາງທ່ຽວຂອງສັດ ທີ່ເຊື່ອມຕໍ່ລະຫວ່າງ ປ່າສະຫງວນດ້ວຍກັນ ຫລື ລະຫວ່າງປ່າສະຫງວນ ແລະ ປ່າປະເພດອື່ນ ແນໃສ່ປົກປັກຮັກສາໃຫ້ມີການຄົງຕົວ ແລະ ການຂະຫຍາຍຕົວຂອງສັດປ່າ. ໃນເຂດດັ່ງກ່າວຫ້າມລ່າສັດ, ຕັດຕົ້ນໄມ້, ດຳເນີນກິດຈະການປ່າໄມ້ ຫລື ກິດຈະການອື່ນ ທີ່ເປັນການກີດຂວາງ ຫລື ທຳລາຍທາງທ່ຽວຂອງສັດ.

**ມາດຕາ 43. ການປົກປັກຮັກສາພັນພືດ, ພັນສັດນ້ຳ, ສັດປ່າ ຢູ່ນອກເຂດປ່າສະຫງວນ**

ພັນໄມ້, ພັນສັດນ້ຳ, ສັດປ່າ ທີ່ຫາຍາກ,ໃກ້ຈະສູນພັນ ຫລື ມີຄຸນຄ່າພິເສດ ຊຶ່ງຢູ່ນອກເຂດປ່າສະຫງວນ ຕ້ອງໄດ້ຮັບການປົກປັກຮັກສາເຊັ່ນດຽວກັນກັບຄືຢູ່ໃນປ່າສະຫງວນ ຊຶ່ງອົງການຄຸ້ມຄອງປ່າໄມ້ ໂດຍສົມທົບກັບອຳນາດການປົກຄອງທ້ອງຖິ່ນ ເປັນຜູ້ອອກລະບຽບການສະເພາະ.

ຫ້າມສົ່ງພັນໄມ້ ຫລືພັນສັດດັ່ງກ່າວເທິງນີ້ ອອກໄປຕ່າງປະເທດຢ່າງເດັດຂາດ ເວັ້ນເສຍແຕ່ໄດ້ຮັບອະນຸຍາດພິເສດ ຈາກກະຊວງກະສິກຳ-ປ່າໄມ້ ເທົ່ານັ້ນ.

**ມາດຕາ 44. ການກັນ, ການຕ້ານພະຍາດພັນໄມ້ ແລະບົ້ງແມງ**

ອົງການຄຸ້ມຄອງປ່າໄມ້ທີ່ກ່ຽວຂ້ອງ ຕ້ອງເປັນຜູ້ຮັບຜິດຊອບໃນການສຶກສາຂໍ້ມູນການເກີດ ແລະການລະບາດ ຂອງເຊື້ອພະຍາດ ແລະ ບົ້ງແມງ, ຈັດຕັ້ງການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດພືດ ແລະ ບົ້ງແມງໃນເຂດປ່າຂອງຕົນ ໂດຍປະສານສົມທົບກັບ ຫນ່ວຍງານທີ່ກ່ຽວຂ້ອງອື່ນໆ, ຮັບຜິດຊອບໃນການຈຳແນກປະເພດເມັດພັນ ຫລື ເບັ້ຍໄມ້ທີ່ປອດພະຍາດ, ສ້າງເຂດປອດພະຍາດ ແລະ ເຂດປ້ອງກັນ, ສ້າງສະຖາບັນ ເພື່ອຮັບປະກັນການອອກໃບຢັ້ງຢືນການຄຸ້ມຄອງການຜະລິດ, ການແຈກຢາຍ ແລະ ການນຳໃຊ້ແນວພັນໄມ້ ທີ່ປອດພະຍາດ .

ເພື່ອສະກັດກັ້ນການລະບາດຂອງພະຍາດພັນໄມ້ ແລະ ບົ້ງແມງ ຫ້າມນຳເຂົ້າ ຫລື ເຄື່ອນຍ້າຍພັນໄມ້ ທີ່ມີເຊື້ອພະຍາດຢ່າງເດັດຂາດ.

**ມາດຕາ 45. ການກັນ ແລະ ສະກັດກັ້ນໄຟໄຫມ້ປ່າ**

ການກັນ ແລະ ສະກັດກັ້ນໄຟໄໝ້ປ່າ ແມ່ນຫນ້າທີ່ຄວາມຮັບຜິດຊອບຂອງຫມົດທຸກຄົນ ອົງການຄຸ້ມຄອງປ່າໄມ້ ແລະ ອຳນາດການປົກຄອງທ້ອງຖິ່ນມີຫນ້າທີ່ ໂຄສະນາ ສຶກສາອົບຮົມປະຊາຊົນ ໃຫ້ເຫັນໄພອັນຕະລາຍຮ້າຍແຮງຂອງໄຟໄຫມ້ປ່າ ແລະ ວາງລະບຽບການ ແລະມາດຕະການທີ່ຈຳເປັນເພື່ອຫລີກເວັ້ນບໍ່ໃຫ້ໄຟໄໝ້ປ່າ.

ໃນກໍລະນີທີ່ເກີດໄຟໄໝ້ປ່າ ອຳນາດການປົກຄອງທ້ອງຖິ່ນ ແລະອົງການຄຸ້ມຄອງປ່າໄມ້ ຕ້ອງເປັນເຈົ້າການແກ້ໄຂ ດ້ວຍການລະດົມພາຫະນະ, ວັດຖຸປະກອນ, ແຮງງານຈາກທຸກພາກສ່ວນ ເຂົ້າໃນການມອດໄຟ. ເມື່ອການມອດໄຟ ໄດ້ສິ້ນສຸດແລ້ວ ຕ້ອງສົ່ງພາຫະນະ, ວັດຖຸປະກອນຄືນໃຫ້ເຈົ້າຂອງເດີມ ຫລືໃຊ້ແທນຄືນຄ່າເສຍຫາຍ ຂອງພາຫະນະ, ວັດຖຸປະກອນຕາມຄວາມເຫມາະສົມ.

ບຸກຄົນ ແລະ ການຈັດຕັ້ງ ລວມທັງກຳລັງປະກອບອາວຸດ ຕ້ອງໃຫ້ຄວາມຮ່ວມມື ແກ່ອຳນາດການປົກຄອງທ້ອງຖິ່ນໃນການມອດໄຟປ່າຢ່າງ ພ້ອມພຽງ ແລະ ທັນເວລາ.

**ມາດຕາ 46. ວັນປູກຕົ້ນໄມ້ແຫ່ງຊາດ, ວັນປ່ອຍປາ ແລະວັນປົກປັກຮັກສາສັດນ້ຳ, ສັດປ່າແຫ່ງຊາດ**

ເພື່ອສ້າງສະຕິຮັກຫອມ ແລະ ປົກປັກຮັກສາປ່າໄມ້,ສັດນໍ້າ, ສັດປ່າ ແລະ ສິ່ງແວດລ້ອມທໍາມະຊາດ ແກ່ປະຊາຊົນບັນດາເຜົ່າ ໂດຍສະເພາະອະນຸຊົນ ແນໃສ່ເຮັດໃຫ້ປ່າໄມ້ ອຸດົມສົມບູນ ແລະ ບໍ່ໃຫ້ ບົກແຫ້ງຈັກເທື່ອ ລັດກໍານົດເອົາ ວັນທີ 1 ມິຖຸນາ ເປັນວັນ ປູກຕົ້ນໄມ້ແຫ່ງຊາດ.

ອໍານາດການປົກຄອງທຸກຂັ້ນ ຕ້ອງສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ເປັນເຈົ້າການຂຶ້ນແຜນ, ປຸກລະດົມທຸກກໍາລັງແຮງງານ, ພາຫະນະ ແລະ ທຶນຮອນຈາກທຸກພາກສ່ວນຢ່າງກວ້າງຂວາງ ນັບທັງກໍາລັງປະກອບອາວຸດ, ພະນັກງານ, ນັກຮຽນ, ນັກສຶກສາ, ປະຊາຊົນເຂົ້າໃສ່ການປູກຕົ້ນໄມ້. ພາຍຫລັງປູກແລ້ວ ຕ້ອງເອົາໃຈໃສ່ບົວລະບັດ, ປົກປັກຮັກສາໃຫ້ຕົ້ນໄມ້ທີ່ປູກນັ້ນ ເຕີບໃຫຍ່ຂະຫຍາຍຕົວ.

ນອກຈາກ ວັນປູກຕົ້ນໄມ້ແຫ່ງຊາດນັ້ນແລ້ວ ລັດ ຍັງກໍານົດເອົາວັນທີ 13 ກໍລະກົດ ເປັນວັນປ່ອຍປາ ແລະ ປົກປັກຮັກສາສັດນໍ້າ ແລະສັດປ່າ ແຫ່ງຊາດ. ສໍາລັບວິທີການ ແລະ ມາດຕະການ ໃນການຈັດຕັ້ງປະຕິບັດ ວັນປ່ອຍປາ ແລະ ປົກປັກຮັກສາສັດນໍ້າ ແລະສັດປ່າແຫ່ງຊາດນັ້ນ ແມ່ນໃຫ້ດໍາເນີນຄືກັນກັບວັນປູກຕົ້ນໄມ້ແຫ່ງຊາດ. ສ່ວນການປູກຕົ້ນໄມ້ ແລະ ການປ່ອຍປາຕົວຈິງນັ້ນ ສາມາດປະຕິບັດໄດ້ຕະຫລອດປີ.

### ມາດຕາ 47. ກອງທຶນພັດທະນາປ່າໄມ້ ແລະຊັບພະຍາກອນປ່າໄມ້

ເພື່ອຮັບປະກັນ ໃຫ້ວຽກງານການປົກປັກຮັກສາປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ດໍາເນີນໄປ ຢ່າງມີປະສິດທິຜົນນັ້ນ ລັດສ້າງກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ຂຶ້ນ.

ແຫຼ່ງກອງທຶນພັດທະນາປ່າໄມ້ ແລະຊັບພະຍາກອນປ່າໄມ້ ໄດ້ມາຈາກ ງົບປະມານຂອງລັດ ແລະ ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ລວມໝູ່, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ອື່ນໆ.

ກອງທຶນພັດທະນາປ່າໄມ້ ແລະຊັບພະຍາກອນປ່າໄມ້ ໃຫ້ນໍາໃຊ້ເຂົ້າສະເພາະແຕ່ ໃນວຽກງານປ່າໄມ້ຕ່າງໆ ເປັນຕົ້ນການປົກປັກຮັກສາປ່າປ້ອງກັນ ແລະ ປ່າສະຫງວນ, ການປູກ ແລະ ຟື້ນຟູປ່າ ເພື່ອປົກປັກຮັກສາແຫຼ່ງນໍ້າ ແລະ ສິ່ງແວດລ້ອມ, ເພື່ອປົກປັກຮັກສາ ແລະ ຂະຫຍາຍສັດນໍ້າ ແລະສັດປ່າ, ການໂຄສະນາອົບຮົມ ນະໂຍບາຍ, ລະບຽບກົດໝາຍ ແລະ ວິຊາການກ່ຽວກັບປ່າໄມ້, ການປົກປັກຮັກສາແຫຼ່ງນໍ້າ, ສິ່ງແວດລ້ອມ ແລະ ອື່ນໆ ທີ່ມີການພົວພັນເຖິງປ່າໄມ້ ແລະຊັບພະຍາກອນປ່າໄມ້.

ສໍາລັບການຈັດຕັ້ງ, ການຄຸ້ມຄອງ ແລະ ການເຄື່ອນໄຫວ ຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ດັ່ງກ່າວ ຈະມີລະບຽບການສະເພາະ.

## ພາກທີ IV
## ສິດ ແລະ ພັນທະຂອງຜູ້ນໍາໃຊ້ປ່າໄມ້ ແລະທີ່ດິນປ່າໄມ້

### ມາດຕາ 48. ການໄດ້ສິດຄອບຄອງນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້

ສິດຄອບຄອງນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໄດ້ມາຈາກ:

- ການໂອນ;
- ການມອບ;

- ການສືບທອດ.

**ມາດຕາ 49. ສິດຂອງຜູ້ຄອບຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

ຜູ້ຄອບຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ມີສິດຄອບຄອງ, ນຳໃຊ້, ໄດ້ຮັບຫມາກຜົນ, ໂອນ ແລະ ສືບທອດປ່າໄມ້ ແລະ ທີ່ດິນປ່າໄມ້.

ສຳລັບການຈັດຕັ້ງຂອງລັດນັ້ນ ແມ່ນມີສິດຄຸ້ມຄອງ, ນຳໃຊ້ ແລະປົກປັກຮັກສາຕາມລະບຽບການ.

**ມາດຕາ 50. ການມອບສິດຄອບຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

ການມອບ ແມ່ນການຕົກລົງ ຂອງອົງການທີ່ມີສິດຫນ້າທີ່ກ່ຽວຂ້ອງ ໃນການເອົາປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ບຸກຄົນ ແລະ ການຈັດຕັ້ງຄອບຄອງ ນຳໃຊ້ຢ່າງຍາວນານ ແລະມີຄວາມສະຫງົບ ຕາມສັນຍາ ແລະ ລະບຽບການສະເພາະ.

**ມາດຕາ 51. ສິດຄອບຄອງ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

ສິດຄອບຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ແມ່ນສິດປົກປັກຮັກສາ, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ຕົນໄດ້ຮັບນັ້ນ.

ສ່ວນສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ແມ່ນສິດໃນການໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ເຂົ້າໃນເປົ້າຫມາຍໃດຫນຶ່ງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງຜູ້ມີສິດຄອບຄອງນຳໃຊ້.

**ມາດຕາ 52. ສິດໄດ້ຮັບຫມາກຜົນຈາກ ປ່າໄມ້ ແລະ ທີ່ດິນປ່າໄມ້**

ສິດໄດ້ຮັບຫມາກຜົນຈາກປ່າໄມ້ ແລະ ທີ່ດິນປ່າໄມ້ແມ່ນສິດເກັບກູ້ຫມາກຜົນຈາກປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ຕົນໄດ້ພັດທະນາ ເຊັ່ນ: ຫມາກຜົນຈາກການໃຫ້ເຊົ່າ, ຫມາກຜົນຈາກການເອົາໄປເປັນຫລັກຊັບຄ້ຳປະກັນ.

**ມາດຕາ 53. ສິດໂອນ ປ່າໄມ້ ແລະ ທີ່ດິນປ່າໄມ້**

ການໂອນແມ່ນການຍົກສິດຄອບຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ຕົນໄດ້ພັດທະນາໃຫ້ຜູ້ອື່ນສືບຕໍ່ຊົມໃຊ້ ຫມາກຜົນທີ່ໄດ້ສ້າງຂຶ້ນນັ້ນ. ການໂອນຕ້ອງໄດ້ແຈ້ງໃຫ້ເຈົ້າຫນ້າທີ່ກ່ຽວຂ້ອງຊາບ ແລະຕ້ອງຂໍຂຶ້ນທະບຽນໃຫມ່ ແລະ ເສຍຄ່າທຳນຽມ ຕາມລະບຽບການ.

**ມາດຕາ 54. ສິດສືບທອດ ປ່າໄມ້ ແລະ ທີ່ດິນປ່າໄມ້**

ການສືບທອດສິດຄອບຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ແມ່ນການຕົກທອດສິດດັ່ງກ່າວ ໄປຍັງ ລູກ, ຫຼານ, ພໍ່, ແມ່ ຫຼືຍາດຕິພີ່ນ້ອງ ພາຍຫຼັງຜູ້ຄອບຄອງນຳໃຊ້ປ່າໄມ້ ແລະທີ່ດິນປ່າໄມ້ໄດ້ເສຍຊີວິດໄປ ແລ້ວ. ການສືບທອດຕ້ອງໄດ້ແຈ້ງໃຫ້ເຈົ້າຫນ້າທີ່ກ່ຽວຂ້ອງຊາບ ແລະ ຕ້ອງຂໍຂື້ນ ທະບຽນໃຫມ່ ແລະ ເສຍ ຄ່າທຳນຽມ ຕາມລະບຽບການ.

**ມາດຕາ 55. ສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຕາມປະເພນີ**

ສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຕາມປະເພນີ ໃຫ້ປະຕິບັດຕາມມາດຕາ 30 ຂອງກົດຫມາຍສະ ບັບນີ້.

**ມາດຕາ 56. ການເຊົ່າປ່າໄມ້ ແລະ ທີ່ດິນປ່າໄມ້**

ປ່າໄມ້ ແລະ ທີ່ດິນປ່າໄມ້ອາດຈະມອບໃຫ້ບຸກຄົນ ແລະ ວິສາຫະກິດເຊົ່າ ຫຼື ສຳປະທານເພື່ອດຳ ເນີນກິດຈະການປູກ, ປົກປັກຮັກສາ, ຂຸດຄົ້ນ ນຳໃຊ້ໂດຍແມ່ນອົງການທີ່ມີສິດຫນ້າທີ່ກ່ຽວຂ້ອງເປັນຜູ້ອະນຸ ມັດ ແລະ ເຊັນສັນຍາຕາມລະບຽບການ.

**ມາດຕາ 57. ພັນທະ ຂອງຜູ້ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

ຜູ້ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ມີພັນທະດັ່ງຕໍ່ໄປນີ້ :

- ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ຖືກຕ້ອງຕາມເປົ້າຫມາຍທີ່ໄດ້ກຳນົດໃຫ້ ແລະ ຖືກຕ້ອງຕາມ ສັນຍາ ແລະ ລະບຽບກົດຫມາຍ;
- ນຳໃຊ້ທຸກວິທີການເພື່ອປົກປັກຮັກສາ ແລະ ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ອຸດົມສົມບູນ ຕະຫຼອດໄປ;
- ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ພ້ອມທັງປົກປັກຮັກສາແຫຼ່ງນ້ຳ, ສັດນ້ຳ, ສັດປ່າ ແລະ ສິ່ງແວດ ລ້ອມ ;
- ເສຍຄ່າຊັບພະຍາກອນ, ຄ່າທຳນຽມປ່າໄມ້, ຄ່າເຊົ່າ ທີ່ດິນປ່າໄມ້ ຕາມລະບຽບກົດຫມາຍ;
- ລາຍງານ ແລະ ໃຫ້ຂໍ້ມູນການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ແກ່ເຈົ້າໜ້າທີ່ ຄຸ້ມຄອງປ່າໄມ້, ອຳ ນາດການປົກຄອງ ທ້ອງຖິ່ນ ແລະ ລັດຖະບານ.

**ມາດຕາ 58. ການສິ້ນສຸດ ສິດຄອບຄອງ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

ສິດຄອບຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຈະສິ້ນສຸດລົງໃນກໍລະນີດັ່ງຕໍ່ໄປນີ້ :

- ການສະລະສິດຄອບຄອງນຳໃຊ້;

- ການໂອນສິດຄອບຄອງນຳໃຊ້;
- ການຖອນສິດຄອບຄອງນຳໃຊ້.

## ພາກທີ V
## ອົງການຄຸ້ມຄອງ ແລະ ກວດກາປ່າໄມ້
### ໝວດທີ1
### ອົງການຄຸ້ມຄອງປ່າໄມ້

**ມາດຕາ 59. ອົງການຄຸ້ມຄອງປ່າໄມ້ ແລະ ກິດຈະການປ່າໄມ້**

ອົງການຄຸ້ມຄອງປ່າໄມ້ ແລະ ກິດຈະການປ່າໄມ້ປະກອບດ້ວຍ: ກະຊວງກະສິກຳ-ປ່າໄມ້, ພະແນກກະສິກຳ-ປ່າໄມ້ ແຂວງ, ກຳແພງນະຄອນ, ຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ອຳນາດການປົກຄອງບ້ານ.

**ມາດຕາ 60. ສິດ ແລະ ໜ້າທີ່ຂອງກະຊວງກະສິກຳ-ປ່າໄມ້**

ໃນການຄຸ້ມຄອງປ່າໄມ້, ທີ່ດິນປ່າໄມ້ ແລະກິດຈະການປ່າໄມ້ ກະຊວງກະສິກຳ-ປ່າໄມ້ ມີສິດ ແລະໜ້າທີ່ຕົ້ນຕໍດັ່ງນີ້:

1. ເປັນເສນາທິການ ໃຫ້ລັດຖະບານ ໃນການຜັນຂະຫຍາຍແນວທາງຍຸດທະສາດ, ແຜນນະໂຍບາຍ ແລະ ນະໂຍບາຍຂອງ ພັກ-ລັດ ໃຫ້ກາຍເປັນແຜນງານ, ໂຄງການລະອຽດ ແລະລະບຽບກົດໝາຍເພື່ອຄຸ້ມຄອງ ວຽກງານປ່າໄມ້, ທີ່ດິນປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ, ສັດປ່າ ແລະ ກິດຈະການປ່າໄມ້ໃນຂອບເຂດທົ່ວປະເທດ;

2. ຄົ້ນຄວ້າວິທະຍາສາດເຕັກນິກທາງດ້ານປ່າໄມ້, ສ້າງຕາໜ່າງສູນສະຖິຕິ ແລະ ຂ່າວສານດ້ານປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ແຫຼ່ງນ້ຳ;

3. ປະສານສົມທົບ ກັບພາກສ່ວນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສຳຫຼວດ ທ່າແຮງ ທາງດ້ານທຳມະຊາດ ກ່ຽວກັບປ່າໄມ້ ແນໃສ່ການຈັດສັນແບ່ງເຂດປ່າໄມ້, ກຳນົດເຂດອະນຸລັກປ່າໄມ້, ປະເພດສັດປ່າ ແລະ ສັດນ້ຳ ທີ່ຕ້ອງສະຫງວນ ຕະຫຼອດຮອດ ການຈັດຕັ້ງປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມທຳມະຊາດ ກ່ຽວກັບປ່າໄມ້;

4. ຄົ້ນຄ້ວາ ແລະ ມີຄຳເຫັນ ກ່ຽວກັບ ການລົງທຶນດ້ານກິດຈະການປ່າໄມ້;

5. ຄົ້ນຄ້ວາບຳລຸງ ແລະ ຍົກລະດັບ ວິຊາການປ່າໄມ້;

6. ພິຈາລະນາກ່ຽວກັບການຫັນປ່ຽນປ່າໄມ້ ຫລືທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້;

7. ຮ່ວມມືກັບຕ່າງປະເທດ ກ່ຽວກັບກິດຈະການປ່າໄມ້.

**ມາດຕາ 61. ສິດ ແລະ ໜ້າທີ່ຂອງພະແນກກະສິກໍາ-ປ່າໄມ້ແຂວງ, ກໍາແພງນະຄອນ**

ໃນການຄຸ້ມຄອງປ່າໄມ້, ທີ່ດິນປ່າໄມ້ ແລະ ກິດຈະການປ່າໄມ້ ພະແນກກະສິກໍາ-ປ່າໄມ້ແຂວງ, ກໍາແພງນະຄອນ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້ :

1. ເປັນເສນາທິການໂດຍກົງ ໃຫ້ກະຊວງກະສິກໍາ-ປ່າໄມ້ ແລະ ອໍານາດການປົກຄອງແຂວງ ແລະ ກໍາແພງນະຄອນ ໃນການຄົ້ນຄ້ວາ, ຊີ້ນໍາບັນຊາ, ວາງແຜນ, ກວດກາ ແລະ ຈັດຕັ້ງຄຸ້ມຄອງມະຫາພາກ ຕາມສາຍຕັ້ງ ແລະ ສາຍຂວາງ ກ່ຽວກັບວຽກງານປ່າໄມ້ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍຢູ່ໃຕ້ການຊີ້ນໍາກວດກາຂອງເຈົ້າແຂວງ, ເຈົ້າຄອງກໍາແພງນະຄອນ;

2. ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ໃນທ້ອງຖິ່ນຂອງຕົນ ດໍາເນີນການສໍາຫຼວດທ່າແຮງດ້ານທໍາມະຊາດກ່ຽວກັບປ່າໄມ້ ແນໃສ່ການຈັດສັນແບ່ງເຂດປ່າໄມ້, ກໍານົດເຂດອະນຸລັກທໍາມະຊາດ, ປະເພດສັດປ່າ ແລະ ສັດນໍ້າ ທີ່ຕ້ອງສະຫງວນ ຕະຫຼອດຮອດການຈັດຕັ້ງ ປົກປັກຮັກສາ ຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມທໍາມະຊາດ ກ່ຽວກັບປ່າໄມ້ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ຄົ້ນຄ້ວາ ແລະ ມີຄໍາເຫັນ ກ່ຽວກັບການລົງທຶນ ດ້ານກິດຈະການປ່າໄມ້;

4. ອອກໃບອະນຸຍາດຂຸດຄົ້ນໄມ້, ເຄື່ອງປ່າຂອງດົງຕາມການອະນຸມັດຂອງລັດຖະບານ ແລະຕາມລະບຽບການສະເພາະ;

5. ພິຈາລະນາ ກ່ຽວກັບການຫັນປ່ຽນປ່າໄມ້ ຫລື ທີ່ດິນປ່າໄມ້ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້;

6. ຄຸ້ມຄອງ ແລະຂຶ້ນທະບຽນເຄື່ອງຈັກຕັດໄມ້ ແລະ ປືນລ່າເນື້ອທຸກຊະນິດ.

**ມາດຕາ 62. ສິດ ແລະໜ້າທີ່ ຂອງ ຫ້ອງການກະສິກໍາ-ປ່າໄມ້ເມືອງ**

ໃນການຄຸ້ມຄອງປ່າໄມ້, ທີ່ດິນປ່າໄມ້ ແລະກິດຈະການປ່າໄມ້ ຫ້ອງການກະສິກໍາ-ປ່າໄມ້ເມືອງ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ເປັນເສນາທິການ ໃຫ້ພະແນກກະສິກໍາ-ປ່າໄມ້ແຂວງ, ກໍາແພງນະຄອນ ແລະ ອໍານາດການປົກຄອງເມືອງ ໃນການຄົ້ນຄ້ວາ ຈັດຕັ້ງປະຕິບັດຕົວຈິງບັນດາແຜນການ, ແຜນງານ, ໂຄງການ, ຂໍ້ກໍານົດກົດລະບຽບ, ຄໍາສັ່ງ, ແຈ້ງການ ແລະ ຂໍ້ແນະນໍາ ຂອງກະຊວງກະສິກໍາ-ປ່າໄມ້ ແລະ ຂອງພະແນກກະສິກໍາ-ປ່າໄມ້ແຂວງ, ກໍາແພງນະຄອນ ພາຍໃຕ້ການຄຸ້ມຄອງກວດກາຂອງເຈົ້າເມືອງ;

2. ຮັບຜິດຊອບ ຈັດຕັ້ງປະຊາຊົນຢູ່ຂັ້ນບ້ານ ຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້, ຈັດຕັ້ງການມອບທີ່ດິນປ່າໄມ້ ແລະ ມອບປ່າ ທີ່ເປັນປ່າຊຸດໂຊມ ຫລື ເນື້ອທີ່ດິນ ປອກໂລ້ນ ໃຫ້ຄອບຄົວປະຊາຊົນຢູ່ໃນແຕ່ລະບ້ານປູກ ຫລື ມອບປ່າເຫຼົ່າ ເພື່ອຟື້ນຟູ ຫລື ບົວລະບັດຮັກສາ ເຮັດໃຫ້ປ່າດັ່ງກ່າວກາຍເປັນ ປ່າໄມ້ຕຶບໜາຄືນໃຫມ່ທີ່ອຸດົມສົມບູນ. ພ້ອມດຽວກັນນັ້ນ ກໍຈັດຕັ້ງການປົກປັກຮັກສາຊັບພະຍາ

ກອນປ່າໄມ້, ປ່າປ້ອງກັນແຫຼ່ງນ້ຳ, ສັດນ້ຳ, ສັດປ່າ ແລະ ປົກປັກຮັກສາສິ່ງແວດລ້ອມທຳມະຊາດ ກ່ຽວກັບປ່າໄມ້ຢ່າງເຂັ້ມງວດ;

3. ຕິດຕາມ ກວດກາການປະຕິບັດ ລະບຽບການ ກ່ຽວກັບ ການຕັດໄມ້, ປຸງແຕ່ງໄມ້ ແລະຜະລິດຕະພັນປ່າໄມ້, ການລ່າເນື້ອ, ຫາປາ ແລະຂາຍສັດປ່າ;

4. ຄົ້ນຄວ້າ ແລະ ມີຄຳເຫັນ ກ່ຽວກັບການລົງທຶນ ດ້ານກິດຈະການປ່າໄມ້;

5. ພິຈາລະນາກ່ຽວກັບການຫັນປ່ຽນປ່າໄມ້ ຫລືທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້.

**ມາດຕາ 63. ສິດ ແລະໜ້າທີ່ຂອງ ອຳນາດການປົກຄອງບ້ານ**

ໃນການຄຸ້ມຄອງປ່າໄມ້, ທີ່ດິນປ່າໄມ້ ແລະ ກິດຈະການປ່າໄມ້ ອຳນາດການປົກຄອງບ້ານ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ຈັດຕັ້ງປະຕິບັດ ມະຕິຄຳສັ່ງ ຂອງເມືອງ ກ່ຽວກັບປ່າໄມ້, ທີ່ດິນປ່າໄມ້ ແລະກິດຈະການປ່າໄມ້;

2. ຈັດຕັ້ງປະຕິບັດການມອບປ່າໄມ້ ແລະ ທີ່ດິນປ່າໄມ້ຂອງບ້ານ ໃຫ້ບຸກຄົນ ແລະ ການຈັດຕັ້ງພາຍໃນບ້ານຄຸ້ມຄອງ, ປົກປັກຮັກສາ, ຟື້ນຟູ, ປູກ, ຂະຫຍາຍ ແລະ ນຳໃຊ້ຢ່າງມີປະສິດທິຜົນຕາມສັນຍາ, ຕາມແຜນການ ແລະ ລະບຽບການ ທີ່ໄດ້ຮັບການອະນຸມັດແລ້ວ ຈາກຫ້ອງການ ກະສິກຳ-ປ່າໄມ້ເມືອງ;

3. ໂຄສະນາສຶກສາອົບຮົມກ່ຽວກັບຄວາມສຳຄັນ ແລະ ຄຸນປະໂຫຍດຂອງປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ, ສັດປ່າ ແຫຼ່ງນ້ຳ ແລະ ສິ່ງແວດລ້ອມທຳມະຊາດ ໃຫ້ປະຊາຊົນ ໃນບ້ານຂອງຕົນເຂົ້າໃຈເຊື່ອມຊຶມ;

4. ຕິດຕາມ, ເກັບກຳ ສະພາບການປ່ຽນແປງ ຂອງປ່າໄມ້, ສິ່ງແວດລ້ອມແລະ ສະພາບການເຄື່ອນໄຫວ ວຽກງານປ່າໄມ້ ໃນຂອບເຂດບ້ານຂອງຕົນ ແລ້ວລາຍງານ ໃຫ້ຫ້ອງການກະສິກຳ-ປ່າໄມ້ເມືອງ;

5. ຈັດຕັ້ງປະຊາຊົນຄຸ້ມຄອງ ປ່າໄມ້ ແລະທີ່ດິນປ່າໄມ້ ໃນຂອບເຂດບ້ານຂອງຕົນ;

6. ສ້າງລະບຽບການສະເພາະ ໃນການຄຸ້ມຄອງ, ປົກປັກຮັກສາ ປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ, ສັດປ່າ ແລະ ສິ່ງແວດລ້ອມທຳມະຊາດ ພາຍໃນບ້ານໃຫ້ຖືກຕ້ອງ ກັບສະພາບຕົວຈິງຂອງບ້ານຕົນ;

7. ຈັດຕັ້ງເຮັດ ອາຊີບຄົງທີ່ ໃຫ້ປະຊາຊົນໃນບ້ານຕົນ ແນໃສ່ຈຳກັດ ແລະ ກ້າວໄປເຖິງ ບ່ອນຍຸດຕິການຕັດໄມ້ທຳລາຍປ່າ ແລະ ປົກປັກຮັກສາສິ່ງແວດລ້ອມທຳມະຊາດ ເຮັດໃຫ້ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ເກີດຄືນ ແລະ ອຸດົມສົມບູນ;

8. ພິຈາລະນາການອະນຸມັດຕັດໄມ້ ຂອງປະຊາຊົນພາຍໃນບ້ານຕົນ ຕາມລະບຽບການ;

9. ຕິດຕາມກວດກາ ແລະ ສະກັດກັ້ນ ການລ່າເນື້ອ ແລະຊື້ຂາຍສັດປ່າ ທີ່ບໍ່ຖືກຕ້ອງຕາມລະບຽບການ;

10. ເປັນເຈົ້າການ ຕ້ານການເຄື່ອນໄຫວ ອັນບໍ່ດີ ທີ່ມີຜົນກະທົບຕໍ່ຊັບພະຍາກອນປ່າໄມ້ ແຫຼ່ງນ້ຳ ແລະ ສິ່ງແວດລ້ອມເຊັ່ນ: ການລັກລອບຕັດໄມ້, ຈູດປ່າ ແລະ ສະກັດກັ້ນທຸກການກະທຳ ທີ່ເປັນການທຳລາຍ ຊັບພະຍາກອນປ່າໄມ້, ສັດນ້ຳ, ສັດປ່າ ແລະ ແຫຼ່ງນ້ຳຢ່າງທັນການ.

## ໝວດທີ 2
## ການກວດກາປ່າໄມ້

### ມາດຕາ 64. ຈຸດປະສົງຂອງການກວດກາປ່າໄມ້

ການກວດກາ ແມ່ນການຕິດຕາມເບິ່ງການເຄື່ອນໄຫວ, ຄຸ້ມຄອງ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຂອງບຸກຄົນ, ການຈັດຕັ້ງ, ວິສາຫະກິດ ແລະ ຂອງເຈົ້າໜ້າທີ່ປ່າໄມ້ ເພື່ອໃຫ້ຖືກຕ້ອງ ຕາມລະບຽບກົດໝາຍປ່າໄມ້ ແລະ ກົດໝາຍອື່ນໆ ຂອງ ສປປ ລາວ ແນໃສ່ເຮັດໃຫ້ການປົກປັກຮັກສາ ແລະ ການພັດທະນາປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ດຳເນີນໄປຢ່າງມີປະສິດທິຜົນ.

### ມາດຕາ 65. ອົງການກວດກາປ່າໄມ້

ອົງການກວດກາປ່າໄມ້ ແມ່ນອົງການ ທີ່ຈັດຕັ້ງຂຶ້ນໃນລະບົບ ອັນດຽວກັນກັບ ອົງການຄຸ້ມຄອງປ່າໄມ້ທີ່ໄດ້ກຳນົດໄວ້ໃນ ມາດຕາ 59 ຂອງກົດໝາຍສະບັບນີ້.

### ມາດຕາ 66.  ປະເພດການກວດກາປ່າໄມ້

ການກວດກາປ່າໄມ້ມີສາມປະເພດດັ່ງນີ້:

- ການກວດກາຕາມລະບົບປົກກະຕິ;
- ການກວດກາໂດຍມີການແຈ້ງການໃຫ້ຮູ້ລ່ວງໜ້າ;
- ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາ ທີ່ມີລັກສະນະກວດກາ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດ ຢ່າງໜ້ອຍໜຶ່ງເທື່ອຕໍ່ປີ .

ການກວດກາ ໂດຍມີການແຈ້ງການໃຫ້ຮູ້ລ່ວງໜ້າ ແມ່ນການກວດກາ ເມື່ອຫາກເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຮັບຜິດຊອບໃນການຄຸ້ມຄອງ ຫລື ດຳເນີນກິດຈະການປ່າໄມ້ ຮູ້ລ່ວງໜ້າ ຢ່າງໜ້ອຍ ຊາວສີ່ຊົ່ວໂມງ.

ການກວດກາ ແບບກະທັນຫັນ ແມ່ນການກວດກາ ເມື່ອຫາກເຫັນວ່າ ມີຄວາມຈຳເປັນ ແຕ່ການລົງກວດການັ້ນ ແມ່ນດຳເນີນຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຮັບຜິດຊອບ ໃນການຄຸ້ມຄອງ ຫລື ດຳເນີນກິດຈະການປ່າໄມ້ ຮູ້ລ່ວງໜ້າ.

ການກວດກາ ໃຫ້ດຳເນີນ ທັງການກວດກາເອກະສານ ແລະ ການລົງກວດກາການປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.

**ມາດຕາ 67. ສິດ ແລະໜ້າທີ່ ຂອງ ອົງການກວດກາປ່າໄມ້**

ອົງການກວດກາປ່າໄມ້ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ກວດກາ ເອກະສານ ແລະ ລົງກວດກາ ການເຄື່ອນໄຫວກັບທີ່;

2. ສັ່ງໃຫ້ຜູ້ທີ່ຖືກກວດກາ ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນ ໃຫ້ຕົນໃນກຳນົດເວລາອັນແນ່ນອນ;

3. ປະຕິບັດ ມາດຕະການ ກ່ຽວກັບ ການກວດກາເຊັ່ນ: ການເຂົ້າກວດຄົ້ນສະຖານທີ່, ສັ່ງໃຫ້ໂຈະການດຳເນີນກິດຈະການ, ອອກຄຳສັ່ງ ຫ້າມການເຄື່ອນຍ້າຍ ວັດຖຸສິ່ງຂອງ ທີ່ຈະກວດກາ ແລະອື່ນໆ;

4. ປະຕິບັດ ມາດຕະການ ກ່ຽວກັບການລະເມີດ ລະບຽບກົດຫມາຍປ່າໄມ້ ເຊັ່ນ: ການສຶກສາອົບຮົມ, ປັບໄຫມ, ກັກຕົວ ຫລື ຈັບຕົວຜູ້ກະທຳຜິດ, ຍຶດຂອງກາງ ການກະທຳຜິດ, ດຳເນີນຄະດີຕໍ່ຜູ້ກະທຳຜິດຕາມກົດຫມາຍ;

5. ຂໍຄວາມຊ່ວຍເຫຼືອຈາກບຸກຄົນ ແລະ ການຈັດຕັ້ງຕ່າງໆຂອງລັດ ແລະ ສັງຄົມລວມທັງກຳລັງປະກອບອາວຸດ ໃນການປະຕິບັດໜ້າທີ່ກວດກາຂອງຕົນ. ບຸກຄົນ ແລະ ການຈັດຕັ້ງດັ່ງກ່າວ ມີພັນທະໃຫ້ຄວາມຮ່ວມມື ແກ່ເຈົ້າຫນ້າທີ່ກວດກາຢ່າງເຫມາະສົມ.

ໃນການດຳເນີນການກວດກາເຈົ້າຫນ້າທີ່ປ່າໄມ້ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 68. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ການຈັດຕັ້ງ ຫລື ວິສາຫະກິດ ທີ່ມີຜົນງານດີເດັ່ນ ໃນການປົກປັກຮັກສາ, ຄຸ້ມຄອງ, ປູກ, ຟື້ນຟູປ່າໄມ້ ແລະ ປ້ອງກັນການທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍ ຊຶ່ງລັດຖະບານເປັນຜູ້ກຳນົດເຊັ່ນ: ເງິນບຳເນັດ, ນະໂຍບາຍສິນເຊື່ອ, ພາສີອາກອນ, ຕໍ່ອາຍຸການໃຫ້ເຊົ່າ, ເພີ່ມເນື້ອທີ່ໃຫ້ເຊົ່າ ແລະອື່ນໆຕາມລະບຽບການ.

**ມາດຕ 69. ມາດຕະການຕໍ່ຜູ້ລະເມີດ**

ມາດຕະການຕົ້ນຕໍຕໍ່ຜູ້ລະເມີດກົດຫມາຍປ່າໄມ້ ມີດັ່ງນີ້ :

- ການສຶກສາອົບຮົມ;
- ການປັບໄໝ;

- ການລົງໂທດທາງອາຍາ.

ນອກຈາກນີ້ ຍັງມີ ມາດຕະການໂທດເພີ່ມ .

**ມາດຕາ 70. ມາດຕະການສຶກສາອົບຮົມ**

ມາດຕະການສຶກສາອົບຮົມ ຈະນຳໃຊ້ຕໍ່ການລະເມີດດັ່ງຕໍ່ໄປນີ້ ຊຶ່ງເປັນການລະເມີດເທື່ອທຳອິດ, ກໍ່ຜົນເສຍຫາຍ ທີ່ມີມູນຄ່າຕ່ຳກ່ວາ 50.000 ກີບ :

1. ການຖາງປ່າເຮັດໄຮ່ນອກເຂດອະນຸຍາດໃຫ້ຖາງ ຫລື ຖາງປ່າເຮັດໄຮ່ ໂດຍບໍ່ຖືກຕ້ອງຕາມລະບຽບການ;
2. ການຕັດຟືນ, ໄມ້ຫຼັກຮົ້ວ, ໄມ້ປຸກສ້າງ ເພື່ອຊົມໃຊ້ໃນຄອບຄົວໂດຍບໍ່ຖືກຕ້ອງຕາມລະບຽບການ;
3. ການເກັບກູ້ ເຄື່ອງປ່າຂອງດົງ ໃນເຂດຫວງຫ້າມ ຫລື ເກັບກູ້ໂດຍບໍ່ຖືກ ຕ້ອງຕາມລະບຽບການ;
4. ການລ່າ ສັດປ່າ ຫລືການຫາສັດນ້ຳ ປະເພດຫວງຫ້າມ, ໃນເຂດຫວງຫ້າມ ຫລືໃນລະດູການທີ່ຕ້ອງຫ້າມ;
5. ການມີສັດປ່າປະເພດຫວງຫ້າມ ໄວ້ໃນຄອບຄອງ ໂດຍບໍ່ຖືກຕ້ອງຕາມລະບຽບການ;
6. ການມີອາວຸດລ່າເນື້ອ ໄວ້ໃນຄອບຄອງ ໂດຍບໍ່ຖືກຕ້ອງຕາມລະບຽບການ;
7. ການນຳເຂົ້າ ພັນພືດ, ພັນສັດນ້ຳ, ສັດປ່າ ໂດຍບໍ່ຖືກຕ້ອງຕາມລະບຽບການ;
8. ການນຳໃຊ້ທີ່ດິນປ່າໄມ້ ໂດຍບໍ່ຖືກຕ້ອງຕາມລະບຽບການ;
9. ການບໍ່ໃຫ້ຄວາມຮ່ວມມື ແກ່ເຈົ້າຫນ້າທີ່ປ່າໄມ້ ໃນເວລາປະຕິບັດງານ;
10. ການບໍ່ລາຍງານ ການນຳໃຊ້ ແລະ ຂໍ້ມູນ ກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້ຕໍ່ເຈົ້າຫນ້າທີ່ປ່າໄມ້;
11. ການລະເມີດອື່ນໆ ທີ່ມີລັກສະນະເບົາບາງ.

**ມາດຕາ 71. ມາດຕະການປັບໃໝ**

ຈະຖືກປັບໄຫມສອງເທົ່າ ຂອງມູນຄ່າຜົນເສຍຫາຍ, ມູນຄ່າຂອງສິນຄ້າ ຫລື ວັດຖຸທີ່ລະເມີດ ຫລື ມູນຄ່າປັບປຸງປົວແປງ, ຄ່າຊັບພະຍາກອນ, ຄ່າທຳນຽມ ຫລື ຄ່າເຊົ່າ ບຸກຄົນໃດຫາກໄດ້ກະທຳຜິດ ດັ່ງຕໍ່ລົງໄປນີ້:

1. ຕໍ່ການກະທຳຜິດເທື່ອທີ່ຫນຶ່ງ ທີ່ໄດ້ກ່າວໄວ້ ໃນຂໍ້ 1,2,3,4,5,6,7 ແລະ 8 ຂອງມາດຕາ 70 ຂ້າງເທິງນີ້ ທີ່ມີມູນຄ່າຜົນເສຍຫາຍ ແຕ່ 50.000 ຫາ 500.000 ກີບ ຫລື ການກະທຳດັ່ງກ່າວ ເປັນການ ກະທຳຜິດເທື່ອທີ່ສອງ ຫາກມີມູນຄ່າຕ່ຳກວ່າ 50.000 ກີບ;
2. ນຳເຂົ້າ, ຂາຍ, ມີໄວ້ໃນຄອບຄອງ ເຄື່ອງຈັກຊຸດຄົ້ນໄມ້ ຫລື ປຸງແຕ່ງໄມ້ ໂດຍບໍ່ໄດ້ຮັບອະນຸຍາດ;

3. ມີໄວ້ໃນຄອບຄອງ, ເຄື່ອນຍ້າຍ ຫລື ສົ່ງໄມ້ ຫລື ຜະລິດຕະພົນປ່າໄມ້ອອກ ໂດຍບໍ່ຖືກຕ້ອງ ຕາມລະບຽບການ;.

4. ນຳໃຊ້ວັດຖຸດິບ ຂອງໂຮງງານປຸງແຕ່ງໄມ້ ໂດຍບໍ່ຖືກຕ້ອງ ຕາມລະບຽບການ;

5. ບໍ່ເສຍຄ່າ ຊັບພະຍາກອນ, ຄ່າທຳນຽມປ່າໄມ້ ຫລື ຄ່າເຊົ່າທີ່ດິນປ່າໄມ້;

6. ລ່າສັດປ່າ ຫລື ຫາສັດນ້ຳ ປະເພດຫວງຫ້າມ ທີ່ມີມູນຄ່າບໍ່ເກີນ 500.000 ກີບ;

7. ຈັບຈອງທີ່ດິນປ່າໄມ້ໂດຍບໍ່ໄດ້ຮັບອະນຸຍາດ;

8. ຫັນປ່ຽນທີ່ດິນປ່າໄມ້ ໂດຍບໍ່ໄດ້ຮັບອະນຸຍາດ;

9. ນຳໃຊ້ທີ່ດິນປ່າໄມ້ ໂດຍບໍ່ຖືກເປົ້າຫມາຍຕາມທີ່ໄດ້ກຳນົດໃຫ້.

**ມາດຕາ 72. ມາດຕະການທາງອາຍາ**

ຈະຖືກລົງໂທດ ຕັດອິດສະຫຼະພາບ ແຕ່ ສາມ ເດືອນຫາ ຫ້າປີ ແລະ ຈະຖືກປັບໄຫມສອງເທົ່າຂອງ ມູນຄ່າສິນຄ້າ ຫລື ວັດຖຸ ຫລື ຂອງມູນຄ່າພົນເສຍຫາຍ ບຸກຄົນໃດຫາກໄດ້ກະທຳຜິດດັ່ງຕໍ່ລົງໄປນີ້:

1. ຕັດໄມ້, ຖາງປ່າ, ຈູດປ່າ ຊຶ່ງພົນເສຍຫາຍ ມີມູນຄ່າສູງກ່ວາ 500.000 ກີບ ຫລື ແມ່ນ ການກະທຳ ທີ່ບໍ່ເຂັດຫຼາບ ແຕ່ສາມເທື່ອຂຶ້ນໄປ ແລະພົນເສຍຫາຍແຕ່ລະຄັ້ງບໍ່ເກີນ 500.000 ກີບ;

2. ລ່າສັດປ່າ ຫລື ຫາສັດນ້ຳ ປະເພດຫວງຫ້າມພິເສດເຊັ່ນ: ງົວບາ, ເສືອຫລາ, ເມີຍ, ຊ້າງ, ຄ່າງ, ຂາແດງ,ປາຂ່າ ແລະອື່ນໆ ຊຶ່ງອີງການທີ່ກ່ຽວຂ້ອງເປັນຜູ້ກຳນົດ ;

3. ລ່າສັດປ່າ ຫລືຫາສັດນ້ຳ ດ້ວຍອຸບປະກອນທີ່ມີລັກສະນະດັບສູນ ;

4. ນຳເຂົ້າ, ຂາຍ ຫລື ມີໄວ້ໃນຄອບຄອງເຄື່ອງຈັກຕັດໄມ້ ຫລື ເຄື່ອງຈັກຊອຍໄມ້ ທີ່ໄດ້ກຳນົດໄວ້ ໃນມາດຕາ 32 ວັກ 2 ຂອງກົດຫມາຍສະບັບນີ້ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ນຳເຂົ້າ, ຂາຍ ຫລືມີໄວ້ໃນ ຄອບຄອງເຄື່ອງຈັກຂຸດຄົ້ນໄມ້ ຫລື ປຸງແຕ່ງໄມ້ໂດຍບໍ່ໄດ້ຮັບອະນຸຍາດ ແຕ່ ສາມ ເທື່ອຂຶ້ນໄປ.

ຈະຖືກລົງໂທດ ຕັດອິດສະຫຼະພາບແຕ່ ຫົກ ເດືອນຫາ ຫ້າ ປີ ພະນັກງານທີ່ອະນຸຍາດ ຕັດ ຫລື ເຄື່ອນຍ້າຍໄມ້ ຊຶ່ງຕົນບໍ່ມີສິດອອກໃບອະນຸຍາດ ຫລື ອອກໃບອະນຸຍາດຕັດໄມ້ເກີນກຳນົດທີ່ໄດ້ຮັບອະນຸຍາດ, ອະນຸມັດການຫັນປ່ຽນ, ມອບ ຫລື ໂອນທີ່ດິນປ່າໄມ້ ໂດຍບໍ່ຖືກຕ້ອງຕາມລະບຽບກົດຫມາຍ ຫລື ສວຍໃຊ້ຫນ້າທີ່ຕຳແຫນ່ງ ເພື່ອພົນປະໂຫຍດສ່ວນຕົວ ຫລື ຮັບສິນບົນ

**ມາດຕາ 73. ມາດຕະການໂທດເພີ່ມ**

ນອກຈາກໂທດຕົ້ນຕໍ ທີ່ໄດ້ກ່າວໄວ້ໃນມາດຕາ 70, 71 ແລະ 72 ຂ້າງເທິງນີ້ແລ້ວ ຜູ້ລະເມີດອາດ ຈະຖືກລົງໂທດເພີ່ມເຊັ່ນ: ໂຈະ ຫລື ຖອນໃບອະນຸຍາດ, ຖອນສິດຄອບຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້, ປູກໄມ້ທົດແທນ, ຮິບພາຫະນະອຸປະກອນ ແລະ ຂອງກາງການກະທຳຜິດ ເປັນຂອງລັດ.

## ພາກທີ VII
## ບົດບັນຍັດສຸດທ້າຍ

ມາດຕາ 74. ການຈັດຕັ້ງປະຕິບັດ

ມອບໃຫ້ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ອອກຂໍ້ ກຳນົດ ລະອຽດ ແລະ ຈັດຕັ້ງປະຕິບັດກົດໝາຍສະບັບນີ້ .

**ມາດຕາ 75. ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດ ນັບແຕ່ມື້ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດ ໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ປ່ຽນແທນດຳລັດສະບັບເລກທີ່ 169/ນຍ ລົງວັນທີ່ 6 ພະຈິກ 1993 ວ່າດ້ວຍ ການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ແລະ ດຳລັດ ສະບັບເລກທີ່ 186/ນຍ ລົງວັນທີ່ 12 ຕຸລາ 1994 ວ່າດ້ວຍການແບ່ງດິນ, ແບ່ງປ່າ ເພື່ອການປູກໄມ້ ແລະ ປົກປັກຮັກສາປ່າໄມ້.

ນອກຈາກນີ້ຂໍ້ກຳນົດອື່ນໆ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ວຽງຈັນ , ວັນທີ 11 ຕຸລາ 1996.
ປະທານສະພາແຫ່ງຊາດ
ເຊັນ ແລະປະທັບຕາ

ສະໝານ ວິຍະເກດ